# ທະນາຄານ ເອເອັນແຊັດ (ລາວ) ຈຳກັດ

## ເອກະສານລາຍງານການເງິນ ສຳລັບປີການບັນຊີສິ້ນສຸດ
## ວັນທີ 31 ທັນວາ 2018
## ແລະ
## ບົດລາຍງານຂອງຜູ້ກວດສອບບັນຊີອິດສະລະ

ເອກະສານລາຍງານການເງິນ ແລະ ບົດລາຍງານຂອງຜູ້ກວດສອບບັນຊີສະບັບນີ້ແມ່ນຖືກລາຍງານເປັນພາສາອັງກິດ. ສ່ວນສະບັບພາສາລາວ ແມ່ນເປັນພຽງສະບັບສົມທຽບເທົ່ານັ້ນ, ໃນກໍລະນີທີ່ບໍ່ສອດຄ່ອງ ແມ່ນຈະຍຶດຖືສະບັບພາສາອັງກິດເປັນຕົວຫຼັກ.

The Financial Statements and Independent Auditor's Report have been prepared in English. The Lao version is reference only; in case of discrepancies, the English version shall prevail.

# ທະນາຄານ ເອເອັນແຊັດ (ລາວ) ຈຳກັດ

**ສາລະບານ** **ໜ້າ**


| | | |
|---|---|---|
| 1 | ຂໍ້ມູນທົ່ວໄປກ່ຽວກັບທະນາຄານ | 1 |
| 2 | ຄວາມຮັບຜິດຊອບຂອງຄະນະຜູ້ບໍລິຫານຕໍ່ເອກະສານລາຍງານການເງິນ | 2-3 |
| 3 | ບົດລາຍງານຂອງຜູ້ກວດສອບບັນຊີອິດສະລະ | 4-6 |
| 4 | ໃບລາຍງານຖານະການເງິນ | 7-8 |
| 5 | ໃບລາຍງານຜົນການດຳເນີນງານ | 9-10 |
| 6 | ໃບລາຍງານສ່ວນປ່ຽນແປງທຶນ | 11 |
| 7 | ໃບລາຍງານກະແສເງິນສົດ | 12-13 |
| 8 | ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ | 15-43 |

# ທະນາຄານ ເອເອັນແຊັດ (ລາວ) ຈຳກັດ

## ຂໍ້ມູນທົ່ວໄປກ່ຽວກັບທະນາຄານ

| | | |
|---|---|---|
| **ທະນາຄານ** | ທະນາຄານ ເອເອັນແຊັດ (ລາວ) ຈຳກັດ | |
| **ໃບອະນຸຍາດການລົງທຶນຕ່າງ** | 007-15/ຜທ/ລທ4, ລົງວັນທີ 08 ທັນວາ 2015 | |
| **ປະເທດເລກທີ** | ໃບທະບຽນວິສາຫະກິດເລກທີ 0274/ຈທວ ວັນທີ 30 ມີນາ 2018 | |
| **ສະພາບໍລິຫານ** | ທ່ານ ອາຊິມ ໂກໂຢ | ປະທານສະພາບໍລິຫານ |
| | ທ່ານ ນາຍເຈີວ ຈາວິສ ໄພເປີ | ກຳມະການ |
| | ທ່ານ ຣູເຟີສ ປິນໂຕ | ກຳມະການ |
| | ທ່ານ ຄາວ ໂຣເດັນ | ກຳມະການ |
| | ທ່ານ ນາງ ແອນນາ ກຣິນ | ກຳມະການ |
| **ຄະນະຜູ້ອຳນວຍການ** | ທ່ານ ຣູເຟີສ ປິນໂຕ | ຜູ້ອຳນວຍການ |
| | ທ່ານ ໂຊພີ ແກ້ວ | ຜູ້ອຳນວຍການຝ່າຍດຳເນີນງານ |
| | ທ່ານ ດິນອ່ານຕວນ ຫງວຽນ | ຜູ້ອຳນວຍການຝ່າຍຄວາມສ່ຽງ |
| | ທ່ານ ເປ່ມ ຄຳມຸງຄຸນ | ຫົວໜ້າພະແນກການເງິນ |
| | ທ່ານ ນາງ ສຸພະຈັນ ຄັນສີລາ | ຫົວໜ້າພະແນກພົວພັນລະຫວ່າງທະນາຄານ |
| | | ຫົວໜ້າພະແນກທະນາຄານສາກົນ |
| | ທ່ານ ນາງ ບັນທະລາ ສີລິຈັນ | ຫົວໜ້າພະແນກຄຸ້ມຄອງເງິນທຶນ |
| | ທ່ານ ນາງ ມຸກດາໄລ ໄຊຍະລາດ | ຫົວໜ້າພະແນກບຸກຄະລາກອນ |
| | ທ່ານ ນາງ ສີມວອນ ສີອາໄພ | ຫົວໜ້າພະແນກລະບຽບການ |
| | ທ່ານ ນາງ ລິ່ມລີວັນ ສີຊານົນ | ຝ່າຍສະໜັບສະໜູນລູກຄ້າ ແລະ ຊ່ວຍເຫຼືອສັງຄົມ |

| | |
|---|---|
| **ສຳນັກງານ** | ທະນາຄານ ເອເອັນແຊັດ (ລາວ) ຈຳກັດ<br>ຕຶກເອເອັນແຊັດ 33,<br>ຖະໜົນ ລ້ານຊ້າງ ຕູ້ ປ.ນ 5001<br>ນະຄອນຫຼວງວຽງຈັນ, ສປປ ລາວ |
| **ຜູ້ກວດສອບບັນຊີ** | ບໍລິສັດ ເຄພີເອັມຈີລາວ ຈຳກັດ<br>ຊັ້ນ 10, ອາຄານ ໂຣໂຢລສະແຄລ<br>ຖະໜົນ ສາມແສນໄທ, ບ້ານ ຫນອງດ້ວງເໜືອ,<br>ເມືອງ ສີໂຄດຕະບອງ, ຕູ້ ປ.ນ. 6978,<br>ນະຄອນຫຼວງວຽງຈັນ, ສປປ ລາວ<br>ໂທ : +856 (21) 454240-7 |

## ຄວາມຮັບຜິດຊອບຂອງຄະນະຜູ້ບໍລິຫານຕໍ່ເອກະສານລາຍງານການເງິນ

ຄະນະກໍາມະການບໍລິຫານທະນາຄານ ເອເອັນແຊັດ(ລາວ)ຈໍາກັດ ("ທະນາຄານ") ມີຄວາມຮັບຜິດຊອບຕໍ່ການກະກຽມເອກະສານລາຍງານການເງິນ ຖືກຕ້ອງຕາມຄວາມເປັນຈິງຂອງຖານະການເງິນ ຂອງທະນາຄານ ໃນວັນທີ 31 ທັນວາ 2018 ແລະ ໃບລາຍງານຜົນການດໍາເນີນງານ, ໃບລາຍງານສ່ວນປ່ຽນແປງທຶນ ແລະ ຄັງສໍາຮອງອື່ນໆ ແລະ ໃບລາຍງານກະແສເງິນສົດ ສໍາລັບປີການບັນຊີສິ້ນສຸດ ທີ່ສອດຄ່ອງກັບລະບຽບການບັນຊີ ຂອງ ທະນາຄານ ແຫ່ງ ສປປ ລາວ ແລະ ຫຼັກການບັນຊີ ໃນ ສປປ ລາວ. ໃນການກະກຽມເອກະສານລາຍງານການເງິນ ຜູ້ບໍລິຫານຂອງທະນາຄານ ຕ້ອງໄດ້ປະຕິບັດດັ່ງນີ້:

i) ນໍາໃຊ້ນະໂຍບາຍການບັນຊີທີ່ເໝາະສົມ ພ້ອມເອກະສານປະກອບ ຢ່າງສົມເຫດສົມຜົນ, ພ້ອມການຕັດສິນຄາດຄະເນຢ່າງຮອບຄອບ ແລະ ພ້ອມນໍາມາປະຕິບັດຢ່າງຕໍ່ເນື່ອງ;

ii) ສອດຄ່ອງກັບລະບຽບການບັນຊີຂອງທະນາຄານ ແຫ່ງ ສປປ ລາວ ແລະ ຫຼັກການບັນຊີໃນ ສປປ ລາວ, ໃນກໍລະນີຫາກມີຄວາມແຕກຕ່າງທາງຜົນປະໂຫຍກທີ່ແທ້ຈິງ, ແລະ ການນໍາສະເໜີຕາມຄວາມເປັນຈິງ ເພື່ອໃຫ້ແນ່ໃຈວ່າເອກະສານລາຍງານເຫຼົ່ານີ້ໄດ້ເປີດເຜີຍຂໍ້ມູນຢ່າງເໝາະສົມ, ພ້ອມອະທິບາຍໃຫ້ເຫດຜົນຕົວຈິງ ທີ່ສົມເຫດສົມຜົນໃນເອກະສານລາຍງານການເງິນ;

iii) ເກັບຮັກສາເອກະສານການບັນທຶກບັນຊີຢ່າງຄົບຖ້ວນ ແລະ ລະບົບການຄຸ້ມຄອງພາຍໃນຢ່າງມີປະສິດທິພາບ;

iv) ປະຕິບັດຂັ້ນຕອນທີ່ສົມເຫດສົມຜົນ ເພື່ອຄວາມປອດໄພຂອງຊັບສິນຂອງທະນາຄານ ແລະ ເພື່ອຫຼີກລ່ຽງ ແລະ ກວດພົບການສໍ້ໂກງ, ຂໍ້ຜິດພາດ ແລະ ສິ່ງຜິດປົກກະຕິອື່ນໆ;

v) ກະກຽມເອກະສານລາຍງານການເງິນ ບົນພື້ນຖານຄວາມສືບເນື່ອງໃນການດໍາເນີນທຸລະກິດ, ຍົກເວັ້ນໃນກໍລະນີທີ່ທາງທະນາຄານຫາກຕັ້ງຂໍ້ສົມມຸດຖານ ຫຼື ຄາດຄະເນວ່າບໍ່ເໝາະສົມທີ່ທາງທະນາຄານຈະດໍາເນີນງານຕໍ່ໄປ ໃນອະນາຄົດ; ແລະ

vi) ຄຸ້ມຄອງ ແລະ ຊີ້ນໍາທະນາຄານຢ່າງມີປະສິດທິພາບ, ມີສ່ວນຮ່ວມໃນການຕັດສິນໃຈຕໍ່ບັນຫາສໍາຄັນ ທີ່ອາດມີຜົນກະທົບຕໍ່ການດໍາເນີນງານຂອງທະນາຄານ ແລະ ຜົນດໍາເນີນງານ ແລະ ທະນາຄານຄວນສະແດງ ໃຫ້ເຫັນວ່າຜົນຂອງການຕັດສິນໃຈດັ່ງກ່າວນັ້ນ ແມ່ນສາມາດເຫັນຜົນໄດ້ໃນເອກະສານລາຍງານການເງິນຂອງທະນາຄານ.

ຄະນະບໍລິຫານຂໍຢັ້ງຢືນວ່າ ທາງຄະນະບໍລິຫານໄດ້ປະຕິບັດຕາມເງື່ອນໄຂທີ່ກ່າວມາຂ້າງເທິງຢ່າງຄົບຖ້ວນ ໃນການກະກຽມເອກະສານລາຍງານການເງິນ.

33 ຖະໜົນ ລ້ານຊ້າງ, ຕູ້ ປນ 5001, ນະຄອນຫຼວງວຽງຈັນ, ສປປ ລາວ ໂທ: (+856 21) 222 700 ແຟັກ: (+856 21) 213 513 ອີເມວ: customercare.laos@anz.com ສະວິບ ANZBLALA
33 Lane Xang Avenue PO Box 5001, Vientiane, Lao PDR T: (+856 21) 222 700 F: (+856 21) 213 513 E: customercare.laos@anz.com SWIFT ANZBLALA

**ການອະນຸມັດປິດລາຍງານການເງິນ**

ຂ້າພະເຈົ້າ, ທ່ານ ຣູເຟີສ ປິນໂຕ ຕາງໜ້າຄະນະຜູ້ບໍລິຫານ ຂໍຮັບຮອງວ່າ: ເອກະສານລາຍງານການເງິນ ຈາກໜ້າ 7 ຫາ 42 ແມ່ນນຳສະເໜີຢ່າງເໝາະສົມຕາມຄວາມເປັນຈິງ, ໃບລາຍງານຖານະການເງິນຂອງທະນາຄານ ນະວັນທີ 31 ທັນວາ 2018, ຜົນປະກອບການທາງການເງິນ, ໃບລາຍງານສ່ວນປ່ຽນແປງຂອງທຶນ ແລະ ຄັງສຳຮອງອື່ນໆ ແລະ ໃບລາຍງານກະແສເງິນສົດ ສຳລັບປີການບັນຊີສິ້ນສຸດ ແມ່ນສອດຄ່ອງກັບລະບຽບການບັນຊີຂອງ ທະນາຄານ ແຫ່ງ ສປປ ລາວ ແລະ ຫຼັກການບັນຊີໃນ ສປປ ລາວ.

*ເຊັນຕາງໜ້າ ຄະນະຜູ້ບໍລິຫານ*

ທະນາຄານ ເອເອັນແຊັດ(ລາວ) ຈຳກັດ ANZ BANK (LAO) LIMITED

ຣູເຟີສ ປິນໂຕ
ຜູ້ອຳນວຍການ

33 ຖະໜົນ ລ້ານຊ້າງ, ຕູ້ ປນ 5001, ນະຄອນຫຼວງວຽງຈັນ, ສປປ ລາວ ໂທ: (+856 21) 222 700 ແຟັກ: (+856 21) 213 513 ອີເມວ: customercare.laos@anz.com ສະວິບ ANZBLALA
33 Lane Xang Avenue PO Box 5001, Vientiane, Lao PDR T: (+856 21) 222 700 F: (+856 21) 213 513 E: customercare.laos@anz.com SWIFT ANZBLALA



ANZ Bank (Lao) Limited

KPMG Lao Co.,Ltd.
10th Floor, Royal Square Office Building,
Samsenthai Road, Nongduong Nua Village,
Sikhotabong District, P.O.Box 6978,
Vientiane, Lao PDR
Tel +856 (21) 454240-7

ບໍລິສັດ ເຄພີເອັມຈີລາວ ຈຳກັດ
ຊັ້ນ 10, ອາຄານ ໂຣໂຢລສະແຄລ
ຖະໜົນ ສາມແສນໄທ, ບ້ານ ໜອງດ້ວງເໜືອ,
ເມືອງ ສີໂຄດຕະບອງ, ຕູ້ ປ.ນ. 6978,
ນະຄອນຫຼວງວຽງຈັນ, ສປປ ລາວ
ໂທ : +856 (21) 454240-7

# ບົດລາຍງານຂອງຜູ້ກວດສອບບັນຊີອິດສະລະ

## ເຖິງ: ສະພາບໍລິຫານທະນາຄານ ເອເອັນແຊັດ (ລາວ) ຈຳກັດ.

*ຄຳເຫັນ*

ພວກຂ້າພະເຈົ້າໄດ້ດຳເນີນການກວດສອບບົດລາຍງານຖານະການເງິນຂອງ ທະນາຄານ ເອເອັນແຊັດ (ລາວ) ຈຳກັດ (" ທະນາຄານ ") ເຊິ່ງປະກອບດ້ວຍໃບລາຍງານຖານະການເງິນໃນວັນທີ 31 ທັນວາ 2018, ໃບລາຍງານຜົນການດຳເນີນງານ, ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ ແລະ ຄັງສຳຮອງອື່ນໆ ແລະ ໃບລາຍງານກະແສເງິນສົດ ສຳລັບປີສິ້ນສຸດໃນວັນດຽວກັນ ແລະ ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ ປະກອບດ້ວຍສັງລວມນະໂຍບາຍການບັນຊີທີ່ສຳຄັນ ແລະ ເລື່ອງອື່ນໆ.

ໃນຄຳເຫັນຂອງພວກຂ້າພະເຈົ້າ ເຫັນວ່າເອກະສານລາຍງານການເງິນ ໄດ້ນຳສະເໜີຖືກຕ້ອງຕາມທີ່ຄວນໃນສາລະສຳຄັນ, ຂອງຖານະການເງິນຂອງທະນາຄານ ນະວັນທີ 31 ທັນວາ 2018 ຜົນການດຳເນີນງານທາງການເງິນ ແລະ ກະແສເງິນສົດ ສຳລັບປີການບັນຊີສິ້ນສຸດວັນດຽວກັນ ສອດຄ່ອງກັບລະບຽບການບັນຊີຂອງທະນາຄານ ແຫ່ງ ສປປ ລາວ ແລະ ຫຼັກການບັນຊີໃນ ສປປ ລາວ

*ພື້ນຖານການສະແດງຄວາມເຫັນ*

ພວກຂ້າພະເຈົ້າໄດ້ດຳເນີນການກວດສອບບັນຊີ ຕາມມາດຕະຖານການກວດສອບບັນຊີສາກົນ ("ISAs"). ຄວາມຮັບຜິດຊອບຂອງພວກຂ້າພະເຈົ້າ ໄດ້ກ່າວໄວ້ໃນສ່ວນຂອງ *ຄວາມຮັບຜິດຊອບຂອງຜູ້ກວດສອບບັນຊີຕໍ່ເອກະສານລາຍງານການເງິນ* ໃນການລາຍງານຂອງພວກຂ້າພະເຈົ້າ. ພວກຂ້າພະເຈົ້າມີຄວາມເປັນເອກະລາດຈາກທະນາຄານໂດຍສອດຄ່ອງກັບກົດຈັນຍາບັນທາງບັນຊີ ສຳລັບນັກວິຊາຊີບບັນຊີຂອງສະພາມາດຕະຖານສາກົນດ້ານຈັນຍາບັນທີ່ກ່ຽວຂ້ອງກັບການກວດສອບເອກະສານລາຍງານການເງິນ ແລະ ພວກຂ້າພະເຈົ້າໄດ້ປະຕິບັດຕາມຄວາມຮັບຜິດຊອບດ້ານຈັນຍາບັນອື່ນໆ ເຊິ່ງເປັນໄປຕາມຂໍ້ກຳນົດເຫຼົ່ານັ້ນ. ພວກຂ້າພະເຈົ້າເຊື່ອວ່າຫຼັກຖານການກວດສອບທີ່ພວກຂ້າພະເຈົ້າໄດ້ຮັບແມ່ນພຽງພໍ ແລະ ເໝາະສົມເພື່ອໃຫ້ເປັນເກນໃນການ ສະແດງຄວາມເຫັນຂອງພວກຂ້າພະເຈົ້າ.

KPMG Lao Co., Ltd. a Company licensed under the Foreign Investment Law of Lao PDR, is a member of KPMG International, a Swiss cooperative.

*ຄວາມຮັບຜິດຊອບຂອງຜູ້ບໍລິຫານຕໍ່ເອກະສານລາຍງານການເງິນ*

ຜູ້ບໍລິຫານມີໜ້າທີ່ຮັບຜິດຊອບໃນການກະກຽມ ແລະ ນຳສະເໜີຢ່າງສົມເຫດສົມຜົນຂອງເອກະສານລາຍງານການເງິນ ເພື່ອໃຫ້ສອດຄ່ອງກັບລະບຽບການບັນຊີຂອງ ທະນາຄານ ແຫ່ງ ສປປລາວ ແລະ ຫຼັກການບັນຊີໃນ ສປປລາວ ແລະ ຮັບຜິດຊອບກ່ຽວກັບການຄວບຄຸມພາຍໃນ ທີ່ຜູ້ບໍລິຫານພິຈາລະນາວ່າຈຳເປັນ ເພື່ອໃຫ້ສາມາດກະກຽມເອກະສານລາຍງານການເງິນ ທີ່ປາດສະຈາກການສະແດງຂໍ້ມູນທີ່ບິດເບືອນຈາກຄວາມເປັນຈິງ ອັນເປັນສາລະສຳຄັນ ບໍ່ວ່າຈະເກີດຈາກການສໍ້ໂກງ ຫຼື ຂໍ້ຜິດພາດ.

ໃນການກະກຽມເອກະສານລາຍງານການເງິນຜູ້ບໍລິຫານມີຄວາມຮັບຜິດຊອບໃນການປະເມີນຄວາມສາມາດຂອງທະນາຄານດ້ານຄວາມສືບເນື່ອງໃນການດຳເນີນທຸລະກິດ, ເປີດເຜີຍເລື່ອງທີ່ກ່ຽວກັບການດຳເນີນງານຕໍ່ເນື່ອງຕາມຄວາມເໝາະສົມ ແລະ ການນຳໃຊ້ຫຼັກການບັນຊີ ສຳລັບການດຳເນີນງານຕໍ່ເນື່ອງ ເວັ້ນແຕ່ຜູ້ບໍລິຫານມີຄວາມຕັ້ງໃຈທີ່ຈະເລີກ ຫຼື ຢຸດດຳເນີນງານ ຫຼື ບໍ່ສາມາດດຳເນີນງານຕໍ່ເນື່ອງໄປໄດ້.

*ຄວາມຮັບຜິດຊອບຂອງຜູ້ກວດສອບບັນຊີ ຕໍ່ການກວດສອບເອກະສານລາຍງານການເງິນ*

ການກວດສອບຂອງພວກຂ້າພະເຈົ້າ ມີວັດຖຸປະສົງເພື່ອໃຫ້ຄວາມເຊື່ອໝັ້ນຢ່າງສົມເຫດສົມຜົນວ່າເອກະສານລາຍງານການເງິນ ໂດຍລວມແມ່ນປາດສະຈາກການສະແດງຂໍ້ມູນບິດເບືອນຈາກຄວາມເປັນຈິງ ອັນເປັນສາລະສຳຄັນ, ບໍ່ວ່າຈະເກີດຈາກການສໍ້ໂກງ ຫຼື ຂໍ້ຜິດພາດ, ແລະ ສະເໜີລາຍງານຂອງຜູ້ກວດສອບບັນຊີ ເຊິ່ງລວມຄວາມເຫັນຂອງພວກຂ້າພະເຈົ້າຢູ່ນຳ ຄວາມເຊື່ອໝັ້ນຢ່າງສົມເຫດສົມຜົນ ຄືຄວາມເຊື່ອໝັ້ນໃນລະດັບສູງ ແຕ່ບໍ່ໄດ້ເປັນການຮັບປະກັນວ່າ ການປະຕິບັດການກວດສອບຕາມມາດຕະຖານການກວດສອບບັນຊີ ຈະສາມາດກວດພົບຂໍ້ມູນທີ່ບິດເບືອນຈາກຄວາມເປັນຈິງອັນເປັນສາລະສຳຄັນ ທີ່ມີຢູ່ໄດ້ສະເໝີໄປ ຂໍ້ມູນທີ່ບິດເບືອນຈາກຄວາມເປັນຈິງອາດເກີດຈາກການສໍ້ໂກງ ຫຼື ຂໍ້ຜິດພາດ ແລະ ຖືວ່າມີສາລະສຳຄັນ ເມື່ອຄາດການໄດ້ຢ່າງສົມເຫດສົມຜົນ ວ່າລາຍການທີ່ບິດເບືອນຈາກຄວາມເປັນຈິງແຕ່ລະລາຍການ ຫຼື ທຸກລາຍການລວມກັນ ຈະມີຜົນຕໍ່ການຕັດສິນໃຈ ທາງເສດຖະກິດຂອງຜູ້ໃຊ້ ເອກະສານລາຍງານການເງິນເຫຼົ່ານີ້.

ໃນການກວດສອບຂອງພວກຂ້າພະເຈົ້າຕາມມາດຕະຖານການກວດສອບບັນຊີ ຂ້າພະເຈົ້າໄດ້ໃຊ້ດຸນພິນິດ ແລະ ການສັງເກດ ແລະ ສົງໄສຢ່າງຜູ້ປະກອບວິຊາຊີບຕະຫຼອດການກວດສອບ ການປະຕິບັດງານຂອງພວກຂ້າພະເຈົ້າ ລວມເຖິງ:

- ລະບຸ ແລະ ປະເມີນຄວາມສ່ຽງຈາກການສະແດງຂໍ້ມູນທີ່ບິດເບືອນຈາກຄວາມເປັນຈິງ ອັນເປັນສາລະສຳຄັນ ໃນເອກະສານລາຍງານການເງິນ, ບໍ່ວ່າຈະເກີດຈາກການສໍ້ໂກງ ຫຼື ຂໍ້ຜິດພາດ ອອກແບບ ແລະ ປະຕິບັດງານຕາມວິທີການກວດສອບເພື່ອຕອບສະໜອງຕໍ່ຄວາມສ່ຽງເຫຼົ່ານັ້ນ ແລະ ໄດ້ຫຼັກຖານການກວດສອບບັນຊີທີ່ພຽງພໍ ແລະ ເໝາະສົມເພື່ອເປັນເກນໃນການສະແດງຄວາມເຫັນຂອງພວກຂ້າພະເຈົ້າ ຄວາມສ່ຽງທີ່ບໍ່ພົບຂໍ້ມູນທີ່ບິດເບືອນຈາກຄວາມເປັນຈິງອັນເປັນສາລະສຳຄັນ ຊຶ່ງເປັນຜົນຈາກການສໍ້ໂກງຈະສູງກວ່າຂໍ້ຜິດພາດ ເນື່ອງມາຈາກການສໍ້ໂກງ ອາດຈະກ່ຽວກັບການສົມຮູ້ຮ່ວມຄິດ ການປອມແປງເອກະສານຫຼັກຖານ ການຕັ້ງໃຈລະເວັ້ນການສະແດງຂໍ້ມູນ ການສະແດງຂໍ້ມູນທີ່ບໍ່ກົງກັບຄວາມເປັນຈິງ ຫຼື ການແຊກແຊງການຄວບຄຸມພາຍໃນ.

KPMG

- ທຳຄວາມເຂົ້າໃຈໃນລະບົບການຄວບຄຸມພາຍໃນທີ່ກ່ຽວຂ້ອງກັບການກວດສອບ ເພື່ອອອກແບບວິທີການກວດສອບທີ່ມີຄວາມເໝາະສົມກັບສະພາບການຕ່າງໆ, ແຕ່ບໍ່ແມ່ນເພື່ອຈຸດປະສົງໃນການສະແດງຄວາມເຫັນຕໍ່ຄວາມມີປະສິດທິຜົນຂອງການຄວບຄຸມພາຍໃນຂອງທະນາຄານ.

- ປະເມີນຄວາມເໝາະສົມຂອງນະໂຍບາຍການບັນຊີ ແລະ ຄວາມສົມເຫດສົມຜົນຂອງການປະມານການທາງບັນຊີ ແລະ ການເປີດເຜີຍຂໍ້ມູນທີ່ທີ່ກ່ຽວຂ້ອງຊຶ່ງຖືກນຳໃຊ້ໂດຍຜູ້ບໍລິຫານ.

- ສະຫຼຸບກ່ຽວກັບຄວາມເໝາະສົມຂອງການໃຊ້ຫຼັກການບັນຊີ ສຳລັບຄວາມສືບເນື່ອງໃນການດຳເນີນທຸລະກິດຂອງຜູ້ບໍລິຫານ ຈາກຫຼັກຖານການກວດສອບບັນຊີທີ່ໄດ້ຮັບ ສະຫຼຸບວ່າມີຄວາມບໍ່ແນ່ນອນທີ່ມີສາລະສຳຄັນກ່ຽວກັບເຫດການ ຫຼື ສະຖານະການທີ່ອາດເປັນເຫດໃຫ້ເກີດຂໍ້ສົງໄສຢ່າງມີສາລະສຳຄັນຕໍ່ຄວາມສາມາດຂອງທະນາຄານ ຕໍ່ຄວາມສືບເນື່ອງໃນການດຳເນີນທຸລະກິດ. ຖ້າຫາກວ່າພວກຂ້າພະເຈົ້າໄດ້ຂໍ້ສະຫຼຸບວ່າ ມີຄວາມບໍ່ແນ່ນອນ, ທີ່ມີສາລະສຳຄັນພວກຂ້າພະເຈົ້າຕ້ອງໄດ້ກ່າວໄວ້ໃນບົດລາຍງານຂອງຜູ້ກວດສອບບັນຊີຂອງພວກຂ້າພະເຈົ້າ ເຖິງການເປີດເຜີຍທີ່ກ່ຽວຂ້ອງ ໃນເອກະສານລາຍງານການເງິນ ຫຼື ຖ້າການເປີດເຜີຍ ດັ່ງກ່າວບໍ່ພຽງພໍ ຄວາມເຫັນຂອງພວກຂ້າພະເຈົ້າຈະປ່ຽນແປງໄປ, ຂໍ້ສະຫຼຸບຂອງພວກຂ້າພະເຈົ້າຂຶ້ນຢູ່ກັບຫຼັກຖານການກວດສອບບັນຊີທີ່ໄດ້ຮັບຈົນເຖິງວັນທີໃນບົດລາຍງານກວດສອບບັນຊີຂອງພວກຂ້າພະເຈົ້າ. ຢ່າງໃດກໍຕາມ, ເຫດການ ຫຼື ສະຖານະການໃນອະນາຄົດອາດເປັນເຫດໃຫ້ທະນາຄານຕ້ອງຢຸດການດຳເນີນງານຕໍ່ເນື່ອງ.

- ປະເມີນການນຳສະເໜີໂຄງສ້າງ ແລະ ເນື້ອຫາຂອງເອກະສານລາຍງານການເງິນ ໂດຍລວມ, ລວມເຖິງການເປີດເຜີຍວ່າເອກະສານລາຍງານການເງິນເພື່ອສະແດງລາຍການ ແລະ ເຫດການໃນຮູບແບບທີ່ເຮັດໃຫ້ການນຳສະເໜີຂໍ້ມູນຖືກຕ້ອງຕາມທີ່ຄວນ.

ພວກຂ້າພະເຈົ້າຕິດຕໍ່ກັບຜູ້ທີ່ມີໜ້າທີ່ໃນການກຳກັບດູແລ ທີ່ກ່ຽວຂ້ອງກັບບັນດາບັນຫາອື່ນໆ, ຂອບເຂດ ແລະ ໄລຍະເວລາໃນການກວດສອບ ຕາມທີ່ໄດ້ວາງແຜນໄວ້ ປະເດັນທີ່ມີສາລະສຳຄັນທີ່ພົບຈາກການກວດສອບລວມເຖິງຂໍ້ບົກຜ່ອງທີ່ມີສາລະສຳຄັນ ໃນລະບົບການຄວບຄຸມພາຍໃນ ຊຶ່ງພວກຂ້າພະເຈົ້າໄດ້ກວດພົບໃນລະຫວ່າງການກວດສອບຂອງພວກຂ້າພະເຈົ້າ.

**ບໍລິສັດ ເຄພີເອັມຈີ ລາວ ຈຳກັດ**

ນະຄອນຫຼວງວຽງຈັນ, ສປປ ລາວ

ວັນທີ 29 MAR 2019

**ທະນາຄານ ເອເອັນແຊັດ ລາວ ຈຳກັດ**
**ໃບລາຍງານຖານະການເງິນ**

| | *ບົດ ອະທິບາຍ* | 31 ທັນວາ 2018 | 31 ທັນວາ 2017 |
|---|---|---|---|
| | | *(ລ້ານກີບ)* | *(ລ້ານກີບ)* |
| **ຊັບສິນ** | | | |
| ເງິນສົດ | *5,22* | 14.787 | 33.159 |
| ທຸລະກຳລະຫວ່າງທະນາຄານ ແລະ ຕະຫຼາດ | | | |
| ເງິນໜີ້ຕ້ອງຮັບຈາກສຳນັກງານໃຫຍ່ ແລະ ສາຂາອື່ນ | | 256.873 | 284.782 |
| ໜີ້ຕ້ອງຮັບຈາກທະນາຄານອື່ນ | *6* | 198.543 | 204.099 |
| ເງິນຝາກຕາມລະບຽບການກັບທະນາຄານກາງ | *7* | 87.719 | 243.387 |
| ເງິນໃຫ້ກູ້ຢືມ ແລະ ເງິນລ່ວງໜ້າ, ສຸດທິ | *8* | 231.607 | 162.835 |
| ຊັບສິນບັດຄັງທີ່ມີຕົວຕົນ | *9* | 4.516 | 13.829 |
| ຊັບສິນບັດລໍຖ້າສະສາງ | *10* | 3.254 | - |
| ຊັບສິນອາກອນລໍຖ້າສະສາງ | *11* | 8.364 | 391 |
| ຊັບສິນອື່ນໆ | *12* | 3.505 | 4.718 |
| **ລວມຍອດ ຊັບສິນ** | | **809.169** | **947.200** |

ບົດອະທິບາຍປະກອບເອກະສານລາຍງານການເງິນ ເປັນສ່ວນໜຶ່ງຂອງເອກະສານລາຍງານສະບັບນີ້.

**ທະນາຄານ ເອເອັນແຊັດ ລາວ ຈຳກັດ**
**ໃບລາຍງານຖານະການເງິນ**

| | ບົດອະທິບາຍ | 31 ທັນວາ 2018 | 31 ທັນວາ 2017 |
|---|---|---|---|
| | | (ລ້ານກີບ) | |
| **ໜີ້ສິນ, ທຶນ ແລະ ຄັງແຮສຳຮອງອື່ນໆ** | | | |
| **ໜີ້ສິນ** | | | |
| ເງິນຝາກຈາກລູກຄ້າ | *13* | 419.449 | 650.377 |
| ທຸລະກຳລະຫວ່າງທະນາຄານ ແລະ ຕະຫຼາດເງິນ ໜີ້ຕ້ອງສົ່ງໃຫ້ທະນາຄານອື່ນ | *14* | 88.380 | 60 |
| ໜີ້ສິນທາງອາກອນ | *15* | 1.155 | 1.209 |
| ໜີ້ສິນອື່ນໆ | *16* | 8.533 | 10.260 |
| **ລວມຍອດໜີ້ສິນ** | | **517.517** | **661.906** |
| | | | |
| **ທຶນ ແລະ ຄັງແຮສຳຮອງອື່ນໆ** | | | |
| ທຶນຈົດທະບຽນຖອກແລ້ວ | *17* | 300.000 | 300.000 |
| ຄັງສຳຮອງຕາມລະບຽບການ | *18* | 3.425 | 3.425 |
| ເງິນແຮສຳຮອງທົ່ວໄປສຳລັບກິດຈະກຳສິນເຊື່ອ | | 1.159 | 1.629 |
| ກຳໄລສະສົມ | | (12.932) | (19.760) |
| **ລວມຍອດທຶນ ແລະ ຄັງແຮສຳຮອງອື່ນໆ** | | **291.652** | **285.294** |
| **ລວມໜີ້ສິນ, ທຶນ ແລະ ຄັງແຮສຳຮອງອື່ນໆ** | | **809.169** | **947.200** |

ບົດອະທິບາຍປະກອບເອກະສານລາຍງານການເງິນ ເປັນສ່ວນໜຶ່ງຂອງເອກະສານລາຍງານສະບັບນີ້.

**ທະນາຄານ ເອເອັນແຊັດ ລາວ ຈຳກັດ**
**ໃບລາຍງານຜົນການດຳເນີນງານ**

| | ບົດ ອະທິບາຍ | 31 ທັນວາ 2018 | 2017 |
|---|---|---|---|
| | | (ລ້ານກີບ) | |
| **ລາຍຮັບຈາກດອກເບ້ຍ** | | | |
| ດອກເບ້ຍຈາກເງິນໃຫ້ກູ້ຢືມ ແລະ ເງິນລ່ວງໜ້າ | | 11.731 | 9.697 |
| ດອກເບ້ຍຈາກທຸລະກຳລະຫວ່າງທະນາຄານ ແລະ ຕະຫຼາດເງິນ | | 6.554 | 4.983 |
| **ລວມລາຍຮັບດອກເບ້ຍ** | | **18.285** | **14.680** |
| **ລາຍຈ່າຍດອກເບ້ຍ** | | | |
| ດອກເບ້ຍເງິນຝາກ | *19* | (2.354) | (4.391) |
| ດອກເບ້ຍເງິນທຸລະກຳລະຫວ່າງທະນາຄານ ແລະ ຕະຫຼາດເງິນ | | (1.324) | (227) |
| **ລວມລາຍຈ່າຍດອກເບ້ຍ** | | **3.678** | **(4.618)** |
| **ລາຍຮັບດອກເບ້ຍສຸດທິ** | | **14.607** | **10.062** |
| ລາຍຮັບ ຄ່າທຳນຽມ ແລະ ຄ່າບໍລິການ | | 6.638 | 11.058 |
| ລາຍຈ່າຍຄ່າທຳນຽມ ແລະ ຄ່າບໍລິການ | | (593) | (2.328) |
| **ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການ, ສຸດທິ** | *20* | **6.045** | **8.730** |
| **ລາຍຮັບອື່ນໆ** | | | |
| ກຳໄລຈາກການແລກປ່ຽນເງິນຕາ | | 20.275 | 13.807 |
| ລາຍຮັບອື່ນໆ | | 3.923 | 10.342 |
| ກຳໄລ(ຂາດທຶນ)ສຸດທິຈາກການສະສາງຊັບສິນບັດຄ້ຳງທີ່ | | (1.986) | 63 |
| **ລວມລາຍຮັບອື່ນໆ** | | **22.212** | **24.212** |
| **ລາຍຮັບ ກ່ອນລາຍຈ່າຍ ທີ່ບໍ່ແມ່ນດອກເບ້ຍ, ບັນຊີໜີ້ເສຍ ແລະ ລາຍຈ່າຍອາກອນກຳໄລ** | | **42.864** | **43.004** |

**ທະນາຄານ ເອເອັນແຊັດ ລາວ ຈໍາກັດ**
**ໃບລາຍງານຜົນການດໍາເນີນງານ**

| | ບົດ ອະທິບາຍ | 31 ທັນວາ 2018 (ລ້ານກີບ) | 31 ທັນວາ 2017 (ລ້ານກີບ) |
|---|---|---|---|
| **ລາຍຈ່າຍການດໍາເນີນງານ** | | | |
| ລາຍຈ່າຍສ່ວນບຸກຄົນ | | (14.240) | (20.349) |
| ລາຍຈ່າຍຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມ | | (3.531) | (3.872) |
| ລາຍຈ່າຍອື່ນໆ | | (26.708) | (26.965) |
| ເງິນແຮສໍາລັບໜີ້ສູນ ແລະ ໜີ້ສົງໄສ ເງິນໃຫ້ກູ້ ແລະ ເງິນລ່ວງໜ້າ | | | |
| ເງິນແຮທົ່ວໄປ | | 470 | 102 |
| ເງິນແຮສະເພາະ | | | (8.140) |
| **ລວມລາຍຈ່າຍການດໍາເນີນງານ** | | **(44.009)** | **(59.224)** |
| **ຂາດທຶນກ່ອນການຈ່າຍອາກອນກໍາໄລ** | | **(1.145)** | **(16.220)** |
| **ຜົນປະໂຫຍດອາກອນກໍາໄລ (ລາຍຈ່າຍ)** | *21* | 7.973 | (1.992) |
| **ກໍາໄລ(ຂາດທຶນ)ໃນປີ** | | **6.828** | **(18.212)** |

ບົດອະທິບາຍປະກອບເອກະສານລາຍງານການເງິນ ເປັນສ່ວນໜຶ່ງຂອງເອກະສານລາຍງານສະບັບນີ້.

**ທະນາຄານ ເອເອັນແຊັດ ລາວ ຈຳກັດ**
**ໃບລາຍງານສ່ວນປ່ຽນແປງທຶນ ແລະ ຄັງສຳຮອງ**

| | ທຶນຈົດທະບຽນ ຖອກແລ້ວ *(ລ້ານກີບ)* | ກຳໄລສະສົມ (ຂາດທຶນສະສົມ) *(ລ້ານກີບ)* | ຄັງສຳຮອງຕາມ ລະບຽບການ *(ລ້ານກີບ)* | ເງິນແຮທົ່ວໄປ ສຳລັບສິນເຊື່ອ *(ລ້ານກີບ)* | ລວມ *(ລ້ານກີບ)* |
|---|---|---|---|---|---|
| **ຍອດເຫຼືອ ໃນວັນທີ 1 ມັງກອນ 2017** | **300.000** | **(1.548)** | **3.425** | **1.731** | **303.608** |
| ປ່ຽນແປງໃນເງິນແຮທົ່ວໄປ | - | - | - | (102) | (102) |
| ຂາດທຶນໃນປີ | - | (18.212) | - | - | (18.212) |
| **ຍອດເຫຼືອ ໃນວັນທີ 31 ທັນວາ 2017 ແລະ ວັນທີ 1 ມັງກອນ 2018** | **300.000** | **(19.760)** | **3.425** | **1.629** | **285.294** |
| ປ່ຽນແປງໃນເງິນແຮທົ່ວໄປ | - | - | - | (470) | (470) |
| ກຳໄລໃນປີ | - | 6.827 | - | - | 6.828 |
| **ຍອດເຫຼືອ ໃນວັນທີ 31 ທັນວາ 2018** | **300.000** | **(12.932)** | **3.425** | **1.159** | **291.652** |

ບົດອະທິບາຍປະກອບເອກະສານລາຍງານການເງິນ ເປັນສ່ວນໜຶ່ງຂອງເອກະສານລາຍງານສະບັບນີ້.

**ທະນາຄານ ເອເອັນແຊັດ ລາວ ຈຳກັດ**
**ໃບລາຍງານກະແສເງິນສົດ**

| | ບົດ ອະທິບາຍ | ປີສິ້ນສຸດ 31 ທັນວາ 2018 | 2017 |
|---|---|---|---|
| | | *(ລ້ານກີບ)* | |
| **ກະແສເງິນສົດຈາກການດຳເນີນທຸລະກິດ** | | | |
| ຂາດທຶນກ່ອນຫັກອາກອນກຳໄລ | | (1.145) | (16.220) |
| *ດັດແກ້ສຳລັບ:* | | | |
| ລາຍຮັບດອກເບ້ຍ | | (18.285) | (14.680) |
| ລາຍຈ່າຍດອກເບ້ຍ | | 3.678 | 4.618 |
| ເງິນແຮສຳລັບໜີ້ສົງໄສຈະສູນ | | (470) | 8.038 |
| ຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມ | | 3.531 | 3.872 |
| ກຳໄລຈາກການສະສາງຊັບສິນບັດຄົງທີ່ | | 1.986 | (63) |
| **ຂາດທຶນຈາກການດຳເນີນງານກ່ອນ ການປ່ຽນແປງຊັບສິນ ແລະ ໜີ້ສິນຈາກການດຳເນີນງານ** | | **(10.705)** | **(14.435)** |
| *ການປ່ຽນແປງໃນຊັບສິນ / ໜີ້ສິນ ຈາກການດຳເນີນງານ* | | | |
| ປ່ຽນແປງໃນເງິນຝາກຕາມລະບຽບການ | | 24.264 | (18.447) |
| ປ່ຽນແປງໃນເງິນໃຫ້ກູ້ຢືມ ແລະ ເງິນລ່ວງໜ້າໃຫ້ແກ່ລູກຄ້າ | | (68.773) | 10.250 |
| ປ່ຽນແປງໃນຊັບສິນບັດຄົງທີ່ ລໍຖ້າສະສາງ | | (3.254) | - |
| ປ່ຽນແປງໃນຊັບສິນອື່ນໆ | | 1.730 | (915) |
| ປ່ຽນແປງຂອງເງິນຝາກຈາກລູກຄ້າ | | (230.928) | 13.517 |
| ປ່ຽນແປງໃນເງິນຝາກຈາກທະນາຄານອື່ນ | | 88.320 | (26.151) |
| ປ່ຽນແປງໃນເງິນຝາກກັບທະນາຄານອື່ນ | | 123.062 | (171.842) |
| ປ່ຽນແປງໃນໜີ້ສິນອື່ນໆ | | (2.686) | (932) |
| ດອກເບ້ຍທີ່ໄດ້ຮັບ | | 17.767 | 15.113 |
| ດອກເບ້ຍທີ່ໄດ້ຈ່າຍ | | (2.771) | (4.725) |
| ຈ່າຍອາກອນກຳໄລ | | - | - |
| **ກະແສເງິນສົດສຸດທິ(ທີ່ໃຊ້)/ຈາກການດຳເນີນທຸລະກິດ** | | **(63.974)** | **(198.567)** |

ບົດອະທິບາຍປະກອບເອກະສານລາຍງານການເງິນ ເປັນສ່ວນໜຶ່ງຂອງເອກະສານລາຍງານສະບັບນີ້.

**ທະນາຄານ ເອເອັນແຊັດ ລາວ ຈຳກັດ**
**ໃບລາຍງານກະແສເງິນສົດ**

| | ບົດ ອະທິບາຍ | ປີສິ້ນສຸດ 31 ທັນວາ 2018 (ລ້ານກີບ) | 2017 |
|---|---|---|---|
| **ກະແສເງິນສົດຈາກກິດຈະກຳການລົງທຶນ** | | | |
| ຊື້ຊັບສົມບັດຄົງທີ່ | | (889) | (4.452) |
| ເງິນໄດ້ຮັບຈາກການສະສາງຊັບສິນ | | 4.685 | 100 |
| **ເງິນສົດສຸດທິ(ທີ່ໃຊ້)/ຈາກກິດຈະກຳການລົງທຶນ** | | **3.796** | **(4.352)** |
| | | | |
| **ປ່ຽນແປງໃນເງິນສົດ ແລະ ທຽບເທົ່າເງິນສົດ ສຸດທິ** | | **(60.178)** | **(202.919)** |
| ເງິນສົດ ແລະ ທຽບເທົ່າເງິນສົດໃນວັນທີ 1 ມັງກອນ | | 457.071 | 659.990 |
| **ເງິນສົດ ແລະ ທຽບເທົ່າເງິນສົດ ໃນວັນທີ 31 ທັນວາ** | *22* | **396.893** | **457.071** |

ບົດອະທິບາຍປະກອບເອກະສານລາຍງານການເງິນ ເປັນສ່ວນໜຶ່ງຂອງເອກະສານລາຍງານສະບັບນີ້.

**ທະນາຄານ ເອເອັນແຊັດ ລາວ ຈຳກັດ**
**ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ**
**ສຳລັບປີສິ້ນສຸດ 31 ທັນວາ 2018**

| **ບົດອະທິບາຍ** | **ເນື້ອໃນ** |
|---|---|
| 1 | ຂໍ້ມູນທົ່ວໄປ |
| 2 | ພື້ນຖານການກະກຽມເອກະສານລາຍງານການເງິນ |
| 3 | ແຈ້ງການ 512/ທຫລ |
| 4 | ສັງລວມນະໂຍບາຍການບັນຊີທີ່ສຳຄັນ |
| 5 | ເງິນສົດ |
| 6 | ໜີ້ຕ້ອງຮັບຈາກທະນາຄານອື່ນໆ |
| 7 | ເງິນຝາກຕາມລະບຽບການກັບທະນາຄານກາງ |
| 8 | ເງິນໃຫ້ກູ້ຢືມ ແລະ ເງິນລ່ວງໜ້າ, ສຸດທິຂອງເງິນແຮສະເພາະ |
| 9 | ຊັບສິນບັດຄັງທີ່ມີຕົວຕົນ |
| 10 | ຊັບສິນບັດຄັງທີ່ລໍຖ້າສະສາງ |
| 11 | ຊັບສິນອາກອນ |
| 12 | ຊັບສິນອື່ນໆ |
| 13 | ເງິນຝາກຈາກລູກຄ້າ |
| 14 | ໜີ້ຕ້ອງສົ່ງໃຫ້ທະນາຄານອື່ນ |
| 15 | ໜີ້ສິນທາງອາກອນ |
| 16 | ໜີ້ສິນອື່ນໆ |
| 17 | ທຶນຈົດທະບຽນຖອກແລ້ວ |
| 18 | ຄັງສຳຮອງຕາມລະບຽບການ |
| 19 | ລາຍຈ່າຍດອກເບ້ຍ |
| 20 | ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການ, ສຸດທິ |
| 21 | ອາກອນກຳໄລ |
| 22 | ເງິນສົດ ແລະ ທຽບເທົ່າເງິນສົດ |
| 23 | ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ |
| 24 | ພາລະຜູກພັນ |
| 25 | ເຫດການທີ່ເກີດຂຶ້ນພາຍຫຼັງ |

**ທະນາຄານ ເອເອັນແຊັດ ລາວ ຈຳກັດ**
**ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ**
**ສຳລັບປີສິ້ນສຸດ 31 ທັນວາ 2018**

## 1. ຂໍ້ມູນທົ່ວໄປ

ທະນາຄານ ເອເອັນແຊັດ (ລາວ) ຈຳກັດ ເປັນທະນາຄານທຸລະກິດຕ່າງປະເທດລົງທຶນ 100% ເຊິ່ງສ້າງຕັ້ງຂຶ້ນໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ("ສປປ ລາວ") ແລະ ມີສຳນັກງານຕັ້ງຢູ່ທີ່ຕຶກ ເອເອັນແຊັດ, 33, ຖະໜົນລ້ານຊ້າງ, ຕູ້ໄປສະນີ 5001, ນະຄອນຫຼວງວຽງຈັນ, ສປປ ລາວ.

ທະນາຄານ ເອເອັນແຊັດ ເລີ່ມຕົ້ນດຳເນີນທຸລະກິດພາຍໃຕ້ຊື່ທະນາຄານເອເອັນແຊັດວຽງຈັນພານິດຈຳກັດ ໃນ ເດືອນກັນຍາ 2007 ເປັນກຸ່ມທະນາຄານຂອງອົດສະຕາລີ ແລະ ນິວຊີແລນ ("ANZBGL'') ເປັນຜູ້ຖືຮຸ້ນລາຍໃຫຍ່ຂອງທະນາຄານ ວຽງຈັນພານິດ ຈຳກັດ, ເຊິ່ງເປັນທະນາຄານເອກະຊົນທີ່ໄດ້ເປີດດຳເນີນທຸລະກິດເປັນເວລາ 14 ປີ. ໃນເດືອນ ສິງຫາ 2010 ທະນາຄານ ເອເອັນແຊັດ ໄດ້ເຂົ້າມາຖືຮຸ້ນຂອງທະນາຄານວຽງຈັນ ພານິດ ຈຳກັດ 100% ແລະ ປ່ຽນຊື່ມາເປັນ ທະນາຄານ ເອເອັນແຊັດ (ລາວ) ຈຳກັດ.

ທະນາຄານ ໄດ້ດຳເນີນທຸລະກິດພາຍໃຕ້ໃບອະນຸຍາດການລົງທຶນຕ່າງປະເທດ ເລກທີ 007-15/ຜທ/ລທ4 ລົງວັນທີ 08 ທັນວາ 2015 ເຊິ່ງອອກໃຫ້ໂດຍກະຊວງແຜນການ ແລະ ການລົງທຶນ ແລະ ໃບທະບຽນວິສາຫະກິດເລກທີ 0274/ຈທວ ລົງວັນທີ 30 ມີນາ 2018 ອອກໂດຍຫ້ອງການທະບຽນວິສາຫະກິດ.

ການບໍລິການຫຼັກຂອງ ທະນາຄານ ແມ່ນອຳນວຍຄວາມສະດວກການໃຫ້ບໍລິການທາງດ້ານການເງິນ ແລະ ການທະນາຄານ ໃນ ສປປ ລາວ.

ໃນວັນທີ 31 ທັນວາ 2018, ທະນາຄານ ມີພະນັກງານທັງໝົດ 39 ຄົນ (2017: 67 ຄົນ)

ໃນລະຫວ່າງປີ 2018 ທະນາຄານໄດ້ມີການປ່ຽນຜູ້ອຳນວຍການ ແລະ ຄະນະບໍລິຫານດັ່ງລຸ່ມນີ້:

ສະມາຊິກຄະນະຜູ້ອຳນວຍການທີ່ໄດ້ຮັບການແຕ່ງຕັ້ງ ແລະ ລາອອກ:

| ຊື່ | ຕຳແໜ່ງ | ວັນທີແຕ່ງຕັ້ງ/ລາອອກ |
|---|---|---|
| ທ່ານ ເກັດຕິນ ຈອນ | ຜູ້ອຳນວຍການຝ່າຍຄວາມສ່ຽງ | ລາອອກໃນວັນທີ 15 ມິຖຸນາ 2018 |
| ທ່ານ ດິນ ອ່ານ ຕວນ ທຽວຽນ | ຜູ້ອຳນວຍການຝ່າຍຄວາມສ່ຽງ | ແຕ່ງຕັ້ງໃນວັນທີ 15 ມິຖຸນາ 2018 |
| ທ່ານ ຄຣິດ ເກີໂມດ | ຫົວໜ້າພະແນກການເງິນ | ລາອອກໃນວັນທີ 04 ກັນຍາ 2018 |
| ທ່ານ ເປັມ ຄຳມຸງຄຸນ | ຫົວໜ້າພະແນກການເງິນ | ແຕ່ງຕັ້ງໃນວັນທີ 04 ກັນຍາ 2018 |
| ທ່ານ ອັກສອນ ບຸພະກອນຄຳ | ທີ່ປຶກສາພາຍໃນປະເທດ | ລາອອກໃນວັນທີ 31 ກໍລະກົດ 2018 |
| ທ່ານ ວິຍາສອນ ມູນນະລາດ | ຝ່າຍສະໜັບສະໜູນລູກຄ້າ ແລະ ຊ່ວຍເຫຼືອສັງຄົມ | ລາອອກໃນວັນທີ 25ມິຖຸນາ 2018 |
| ທ່ານ ນາງ ລິ່ມລີວັນ ສີຊານົນ | ຝ່າຍສະໜັບສະໜູນລູກຄ້າ ແລະ ຊ່ວຍເຫຼືອສັງຄົມ | ແຕ່ງຕັ້ງໃນວັນທີ 25ມິຖຸນາ 2018 |

## 2. ພື້ນຖານການກະກຽມເອກະສານລາຍງານການເງິນ

## (ກ) ຫຼັກການພື້ນຖານບັນຊີທົ່ວໄປ

### *(i)* ພື້ນຖານໃນການກະກຽມ

ເອກະສານລາຍງານການເງິນທີ່ເຮັດຂຶ້ນສະແດງເປັນຫົວໜ່ວຍລ້ານລາວກີບ ("ລ້ານກີບ") ໂດຍສອດຄ່ອງກັບ ດຳລັດເລກທີ 02/ນຍ ຂອງນາຍົກລັດຖະມົນຕີແຫ່ງ ສປປລາວ ລົງວັນທີ 22 ມີນາ 2000, ກົດ ໝາຍບັນຊີວິສາຫະກິດ ຂອງ ສປປ ລາວ ແລະ ຫຼັກການບັນຊີຂອງທະນາຄານ ແຫ່ງ ສປປ ລາວ ແລະ ຫຼັກການບັນຊີໃນ ສປປ ລາວ. ເປັນສະກຸນເງິນທີ່ໃຊ້ໃນການດຳເນີນງານຂອງທະນາຄານ.

ເອກະສານລາຍງານການເງິນໄດ້ຖືກກະກຽມໃຫ້ສອດຄ່ອງກັບ ຫຼັກການບັນຊີ ຂອງທະນາຄານ ແຫ່ງ ສປປ ລາວ ແລະ ຫຼັກການບັນຊີໃນ ສປປ ລາວ, ເຊິ່ງອາດຈະແຕກຕ່າງຈາກການລາຍງານຕາມມາດຕະຖານ ການລາຍງານການເງິນແບບສາກົນ ແລະ ລະບຽບຫຼັກການບັນຊີທີ່ມີການຍອມຮັບ ແລະ ປະຕິບັດໃນປະເທດອື່ນໆ. ດັ່ງນັ້ນ, ເອກະສານລາຍງານການເງິນນີ້ ບໍ່ມີຈຸດປະສົງທີ່ຈະສະແດງຖານະການເງິນ, ຜົນຂອງການດຳເນີນງານ, ການປ່ຽນແປງຂອງທຶນ, ກະແສເງິນສົດ ແລະ ບົດອະທິບາຍຊ້ອນທ້າຍ ຕາມຫຼັກການບັນຊີທີ່ຖືກຍອມຮັບຕາມນະໂຍບາຍບັນຊີ ແລະ ການປະຕິບັດໂດຍທົ່ວໄປ ໃນບັນດາປະເທດ ແລະ ຂົງເຂດອື່ນໆ ທີ່ນອກເໜືອຈາກ ສປປ ລາວ. ນອກຈາກນີ້, ເອກະສານລາຍງານການເງິນສະບັບນີ້ ບໍ່ໄດ້ຖືກສ້າງຂຶ້ນໃຫ້ຜູ້ທີ່ບໍ່ຮູ້ກ່ຽວກັບນະໂຍບາຍບັນຊີ, ການດຳເນີນງານ ແລະ ການປະຕິບັດກົດໝາຍ ແລະ ຂໍ້ກຳນົດຂອງ ສປປ ລາວ.

ທະນາຄານເປັນທະນາຄານທຸລະກິດຕ່າງປະເທດລົງທຶນ 100% ຊຶ່ງດຳເນີນການຢູ່ໃນ ສປປ ລາວ. ເອກະສານລາຍງານການເງິນແມ່ນຖືກກະກຽມຈາກການບັນທຶກຂອງທະນາຄານ ແລະ ສະທ້ອນເຖິງທຸລະກຳທີ່ບັນທຶກຢູ່ພາຍໃນເທົ່ານັ້ນ, ທະນາຄານມີລາຍການທຸລະກຳທີ່ສຳຄັນ ແລະ ຍອດເງິນໃນບັນຊີກັບສຳນັກງານໃຫຍ່ ແລະ ສາຂາອື່ນ.

ເອກະສານລາຍງານການເງິນ ແມ່ນໄດ້ຖືກອະນຸມັດໂດຍຄະນະຜູ້ບໍລິຫານໃນວັນທີ 23 ມີນາ 2018.

### *(ii)* ພື້ນຖານການປະເມີນ

ເອກະສານລາຍງານການເງິນ ແມ່ນໄດ້ກະກຽມຂຶ້ນຕາມຫຼັກການຕົ້ນທຶນເດີມ ຍົກເວັ້ນແຕ່ທີ່ໄດ້ກ່າວໄວ້ໃນນະໂຍບາຍການບັນຊີ. ນະໂຍບາຍການບັນຊີແມ່ນໄດ້ຖືກນຳໃຊ້ຢ່າງສອດຄ່ອງກັບທະນາຄານ ແລະ ສອດຄ່ອງກັບຫຼັກການທີ່ໄດ້ນຳໃຊ້ໃນປີຜ່ານມາ

### *(iii)* ການປະມານການ ແລະ ໃຊ້ດຸນພິນິດ

ໃນການກະກຽມເອກະສານລາຍງານການເງິນຂອງທະນາຄານ, ຜູ້ບໍລິຫານຕ້ອງໄດ້ໃຊ້ດຸນພິນິດ, ການປະມານ ແລະ ຂໍ້ສົມມຸດຕິຖານຫຼາຍປະການ ຕາມຄວາມຮູ້ເຂົ້າໃຈຂອງຄະນະຜູ້ບໍລິຫານຕໍ່ສະພາບປະຈຸບັນ ແລະ ການປະຕິບັດທີ່ມີຜົນກະທົບຕໍ່ການກຳນົດນະໂຍບາຍການບັນຊີ ແລະ ການລາຍງານຈຳນວນເງິນທີ່ກ່ຽວກັບ ຊັບສິນ, ໜີ້ສິນ, ລາຍຮັບ, ລາຍຈ່າຍ ແລະ ການເປີດເຜີຍໜີ້ສິນທີ່ອາດເກີດຂຶ້ນໃນວັນທີລາຍງານ.

ການຄາດຄະເນ ແລະ ການສົມມຸດຖານ ແມ່ນໄດ້ຖືກທົບທວນຄືນຢ່າງຕໍ່ເນື່ອງ, ຜົນໄດ້ຮັບທີ່ແທ້ຈິງອາດຈະແຕກຕ່າງຈາກການປະເມີນຂອງ ການບໍລິຫານ ແລະ ສ່ວນແຕກຕ່າງເຫຼົ່ານັ້ນ ອາດຈະມີຄວາມຈຳເປັນທີ່ຈະຕ້ອງມີການແກ້ໄຂທີ່ໃຫ້ເປັນທີ່ຍອມຮັບໃນໄລຍະທີ່ການປະເມີນຖືກມີການແກ້ໄຂ ແລະ ໃນໄລຍະທີ່ຈະໄດ້ຮັບຜົນກະທົບ ໃນອະນາຄົດ.

### (ຂ) ລາຍການເຄື່ອນໄຫວຂອງສະກຸນເງິນຕາຕ່າງປະເທດ

ລາຍການເຄື່ອນໄຫວຂອງສະກຸນເງິນຕາຕ່າງປະເທດຈະຖືກປ່ຽນເປັນສະກຸນເງິນທີ່ນຳໃຊ້ໃນການດຳເນີນງານໃນອັດຕາແລກປ່ຽນໃນວັນທີທີ່ລາຍການເຄື່ອນໄຫວດັ່ງກ່າວເກີດຂຶ້ນ.

ຊັບສິນ ແລະ ໜີ້ສິນ ທີ່ບໍ່ເປັນຕົວເງິນ ເຊິ່ງເກີດຈາກລາຍການບັນຊີທີ່ເປັນເງິນຕາຕ່າງປະເທດ ແປງຄ່າເປັນສະກຸນເງິນທີ່ນຳໃຊ້ໃນການດຳເນີນງານໂດຍໃຊ້ອັດຕາແລກປ່ຽນໃນວັນທີທີ່ເກີດລາຍການ. ສ່ວນແຕກຕ່າງຂອງອັດຕາແລກປ່ຽນທີ່ມີຕົວຕົນ ແລະ ບໍ່ມີຕົວຕົນແມ່ນໄດ້ຖືກນຳມາສະເໜີໃນໃບລາຍງານຜົນການດຳເນີນງານ.

ຊັບສິນ ແລະ ໜີ້ສິນ ທີ່ບໍ່ເປັນຕົວເງິນ ເຊິ່ງເກີດຈາກລາຍການບັນຊີທີ່ເປັນເງິນຕາຕ່າງປະເທດ ຊຶ່ງບັນທຶກຕາມເກນ ລາຄາທຶນເດີມແປງຄ່າເປັນສະກຸນເງິນທີ່ນຳໃຊ້ໃນການດຳເນີນງານໂດຍໃຊ້ອັດຕາແລກປ່ຽນໃນວັນທີທີ່ເກີດລາຍການ.

ອັດຕາແລກປ່ຽນເງິນກີບທີ່ນຳໃຊ້ປຽບທຽບກັບເງິນຕາຕ່າງປະເທດ ມີດັ່ງນີ້:

| | 31 ທັນວາ 2018 | 31 ທັນວາ 2017 |
|---|---|---|
| ໂດລາສະຫາລັດ ("USD") | 8.510,00 | 8.274,00 |
| ໄທບາດ ("THB") | 266,36 | 253,97 |
| ຢູໂຣ ("EUR") | 9.757,00 | 9.893,00 |

### (ຄ) ປີການບັນຊີ

ໄລຍະເວລາການລາຍງານຂອງທະນາຄານເລີ່ມຕັ້ງແຕ່ວັນທີ 1 ມັງກອນ ແລະ ສິ້ນສຸດວັນທີ 31 ທັນວາ.

## 3. ແຈ້ງການ 512/ທຫລ

ໃນວັນທີ 29 ມິຖຸນາ 2018, ທະນາຄານ ແຫ່ງ ສປປລາວ ("ທຫລ") ໄດ້ອອກຂໍ້ຕົກລົງເລກທີ 512/ທຫລ ("ທຫລ 512") ກ່ຽວກັບການຈັດຊັ້ນໜີ້ ແລະ ການຫັກເງິນແຮສຳລັບເງິນກູ້ ເພື່ອປ່ຽນແທນຂໍ້ຕົກລົງເລກທີ 324/ທຫລ ("ທຫລ 324") ລົງວັນທີ 19 ເມສາ 2011.

ທຫລ 512 ໂດຍສ່ວນໃຫຍ່ຍັງຮັກສາຂໍ້ກຳນົດເກົ່າໃນ ທຫລ 324 ສຳລັບການຈັດຊັ້ນໜີ້ຂອງເງິນກູ້ ໂດຍພິຈາລະນາຈາກສະຖານະການຊຳລະ ແລະ ປັດໄຈທາງຄຸນນະພາບອື່ນໆ. ເຖິງຢ່າງໃດກໍ່ຕາມ, ການປ່ຽນແປງທີ່ສຳຄັນບາງຢ່າງໃນນະໂຍບາຍການບັນຊີຂອງທະນາຄານ ມີຜົນກະທົບມາຈາກການປະຕິບັດຕາມ ທຫລ 512 ດັ່ງນີ້.

### (ກ) ການຈັດຊັ້ນສິນເຊື່ອທີ່ເກີດດອກອອກຜົນ ແລະ ທີ່ບໍ່ເກີດດອກອອກຜົນ

ອີງຕາມ ທຫລ 512, ການຈັດຊັ້ນໜີ້ເງິນກູ້ ປົກກະຕິ (ກຸ່ມ A) ແມ່ນພິຈາລະນາເປັນສິນເຊື່ອທີ່ເກີດດອກອອກຜົນ, ເງິນກູ້ທີ່ຈັດຊັ້ນໜີ້ທີ່ຄວນເອົາໃຈໃສ່ (ກຸ່ມ B) ຫຼື ຕ່ຳກວ່າມາດຕະຖານ (ກຸ່ມ C) ຫຼື ໜີ້ສົງໄສ (ກຸ່ມ D) ຫຼື ໜີ້ສູນ (ກຸ່ມ E) ແມ່ນໄດ້ພິຈາລະນາເປັນສິນເຊື່ອທີ່ບໍ່ເກີດດອກອອກຜົນ, ພາຍໃຕ້ຂໍ້ຕົກລົງທີ່ຜ່ານມາ, ການຈັດຊັ້ນໜີ້ໃນກຸ່ມ A ຫຼື ກຸ່ມ B ທັງສອງພິຈາລະນາເປັນສິນເຊື່ອທີ່ເກີດດອກອອກຜົນ, ແລະ ຊັ້ນໜີ້ໃນກຸ່ມ C ຫຼື ກຸ່ມ D ຫຼື ກຸ່ມ E ຖືກພິຈາລະນາເປັນສິນເຊື່ອທີ່ບໍ່ເກີດດອກອອກຜົນ.

ສຳລັບລາຍລະອຽດການຈັດຊັ້ນໜີ້ຂອງເງິນກູ້, ໃຫ້ເບິ່ງໃນບົດອະທິບາຍຊ້ອນທ້າຍຂໍ້ທີ 4 (ຊ).

### (ຂ) ການຫັກເງິນແຮທົ່ວໄປສຳລັບເງິນກູ້ທີ່ເກີດດອກອອກຜົນ

ອີງຕາມ ທຫລ 512, **ທະນາຄານ**ຕ້ອງໄດ້ສ້າງເງິນແຮທົ່ວໄປສຳລັບເງິນກູ້ທີ່ເກີດດອກອອກຜົນ ໃນອັດຕາຄົງທີ 0.5% ຂອງຍອດເຫຼືອທັງໝົດຂອງສິນເຊື່ອປົກກະຕິ, ເງິນແຮສຳລັບໜີ້ທີ່ຄວນເອົາໃຈໃສ່ ແມ່ນພິຈາລະນາຈາກເງິນແຮສະເພາະພ້ອມກັບເງິນແຮສຳລັບໜີ້ຕ່ຳກວ່າມາດຕະຖານ, ໜີ້ສົງໄສ ແລະ ໜີ້ສູນ, ພາຍໃຕ້ຂໍ້ຕົກລົງທີ່ຜ່ານມາ, ເງິນແຮສຳລັບໜີ້ທົ່ວໄປລວມ 3% ຂອງຍອດເຫຼືອຂອງເງິນກູ້ທີ່ຄວນເອົາໃຈໃສ່, ແລະ ອັດຕາເງິນແຮໜີ້ທົ່ວໄປແມ່ນໃຫ້ຢູ່ໃນຊ່ວງ 0.5% ເຖິງ 1% ອີງຕາມຂໍ້ຕົກລົງເລກທີ 242/ທຫລ ລົງວັນທີ 2 ເມສາ 2010.

ສຳລັບລາຍລະອຽດການຫັກເງິນແຮເພື່ອໃຫ້ສອດຄ່ອງກັບ ທຫລ 512, ໃຫ້ເບິ່ງໃນບົດອະທິບາຍຊ້ອນທ້າຍຂໍ້ທີ 4 (ຊ).

### (ຄ) ການຫັກເງິນແຮສະເພາະສຳລັບເງິນກູ້ທີ່ບໍ່ເກີດດອກອອກຜົນ

ພາຍໃຕ້ ທຫລ 512, ເງິນແຮສະເພາະສຳລັບເງິນກູ້ທີ່ບໍ່ເກີດດອກອອກຜົນປະກອບມີ ເງິນແຮສຳລັບໜີ້ທີ່ຄວນເອົາໃຈ ໃສ່, ໜີ້ຕ່ຳກວ່າມາດຕະຖານ, ໜີ້ສົງໄສ ແລະ ໜີ້ສູນ. ການຫັກເງິນແຮນີ້ໄດ້ເຮັດຂຶ້ນຈາກການຄູນຍອດເຫຼືອຂອງແຕ່ລະລາຍການເງິນກູ້ຫັກດ້ວຍມູນຄ່າຫຼັກຄ້ຳປະກັນ (ຖ້າມີ) ຕາມຂໍ້ຕົກລົງຂອງ ທຫລ ກັບອັດຕາການຫັກເງິນແຮທີ່ບັງຄັບໃຊ້ກັບການຈັດຊັ້ນໜີ້ເງິນກູ້, ມູນຄ່າຂອງຫຼັກຄ້ຳປະກັນຈະບໍ່ໄດ້ນຳມາພິຈາລະນາ ໃນການຄຳນວນພາຍໃຕ້ຂໍ້ກຳ ນົດທີ່ຜ່ານມາ.

ສຳລັບລາຍລະອຽດເພີ່ມເຕີມກ່ຽວກັບວິທີການການສ້າງເງິນແຮເພື່ອໃຫ້ສອດຄ່ອງກັບ ທຫລ 512, ໃຫ້ເບິ່ງໃນບົດອະ ທິບາຍຊ້ອນທ້າຍຂໍ້ທີ 4 (ຊ).

### (ງ) ການລ້າງໜີ້ສູນ

ອີງຕາມ ທຫລ 512, ປະເພດເງິນກູ້ໜີ້ສູນ (ກຸ່ມ E) ຕ້ອງໄດ້ຈົດອອກພາຍໃນ 90 ວັນ ນັບຈາກມື້ຈັດຊັ້ນໜີ້ເປັນໜີ້ສູນ, ພາຍໃຕ້ຂໍ້ຕົກລົງເກົ່າ, ການລ້າງປະເພດເງິນກູ້ໜີ້ສູນ ແມ່ນຍົກຍອດໄປຈົນຮອດມື້ສິ້ນສຸດຂອງໄຕມາດ ແຕ່ບໍ່ຊ້າກວ່າມື້ສິ້ນໄຕມາດສຸດທ້າຍຂອງປີປະຕິທິນ.

ສຳລັບລາຍລະອຽດເພີ່ມເຕີມ ກ່ຽວກັບນະໂຍບາຍການລ້າງໜີ້ສູນຂອງທະນາຄານ ແມ່ນສອດຄ່ອງກັບ ທຫລ 512, ໃຫ້ເບິ່ງໃນບົດອະທິບາຍຊ້ອນທ້າຍຂໍ້ທີ 4 (ຍ).

### (ຈ) ການຫັກເງິນແຮສຳລັບພາລະຜູກພັນທາງການເງິນນອກໃບສະຫຼຸບຊັບສິນບັດ

ອີງຕາມ ທຫລ 512, ທະນາຄານໄດ້ຈັດປະເພດ ແລະ ຫັກເງິນແຮ ສຳລັບພາລະຜູກພັນທາງການເງິນນອກໃບສະຫຼຸບຊັບສິນບັດ ຖ້າທະນາຄານຍັງບໍ່ໄດ້ຊຳລະເງິນຕາມສັນຍາຄ້ຳປະກັນແທນລູກຄ້າ, ການຈັດປະເພດ ແລະ ການຫັກເງິນແຮ ສຳລັບພາລະຜູກພັນທາງການເງິນ ນອກໃບສະຫຼຸບຊັບສິນບັດບໍ່ໄດ້ລະບຸໄວ້ໃນຂໍ້ຕົກລົງທີ່ຜ່ານມາ.

ສຳລັບລາຍລະອຽດເພີ່ມເຕີມ ກ່ຽວກັບນະໂຍບາຍການຈັດປະເພດ ແລະ ການຫັກເງິນແຮ ສຳລັບພາລະຜູກພັນທາງການເງິນຂອງທະນາຄານ ແມ່ນສອດຄ່ອງກັບ ທຫລ 512, ໃຫ້ເບິ່ງໃນບົດອະທິບາຍຊ້ອນທ້າຍຂໍ້ທີ 4 (ດ).

### (ສ) ການປ່ຽນແປງ

ມັນບໍ່ໄດ້ມີຜົນກະທົບທີ່ສຳຄັນຈາກການປ່ຽນແປງໃນການຈັດຕັ້ງປະຕິບັດຂອງແຈ້ງການເລກທີ 512/ທຫລ ເນື່ອງຈາກວ່າເງິນກູ້ຂອງທະນາຄານທັງໝົດແມ່ນໄດ້ປະຕິບັດຕາມແຈ້ງການເລກທີ 512/ທຫລ.

## 4. ນະໂຍບາຍການບັນຊີທີ່ເປັນສາລະສຳຄັນຕ່າງໆ

ນະໂຍບາຍທາງດ້ານບັນຊີທີ່ເປັນສາລະສຳຄັນດັ່ງລຸ່ມນີ້ ແມ່ນທະນາຄານໄດ້ນຳໃຊ້ເຂົ້າໃນການກະກຽມເອກະສານລາຍງານການເງິນໃນແຕ່ລະປີຢ່າງຕໍ່ເນື່ອງ.

### (ກ) ເຄື່ອງມືທາງການເງິນ

ເຄື່ອງມືທາງການເງິນຂອງທະນາຄານ ປະກອບມີ ເງິນສົດ ແລະ ທຽບເທົ່າເງິນສົດ, ເງິນກູ້ທີ່ເກີດຂຶ້ນ ແລະ ໜີ້ຕ້ອງຮັບເງິນຝາກ, ເງິນລະຫວ່າງທະນາຄານ ແລະ ໜີ້ຕ້ອງຮັບອື່ນໆ ແລະ ໜີ້ຕ້ອງສົ່ງ. ນະໂຍບາຍການບັນຊີສຳລັບການຮັບຮູ້ ແລະ ການປະເມີນລາຍການເຫຼົ່ານີ້ ແມ່ນໄດ້ຖືກເປີດເຜີຍໄວ້ໃນບັນດານະໂຍບາຍການບັນຊີຕາມລຳດັບ.

### (ຂ) ເງິນສົດ ແລະ ທຽບເທົ່າເງິນສົດ

ເງິນສົດ ແລະ ທຽບເທົ່າເງິນສົດປະກອບມີ: ເງິນສົດ ແລະ ເງິນລົງທຶນໄລຍະສັ້ນທີ່ມີສະພາບຄ່ອງສູງມີອາຍຸຄົບກຳນົດໜ້ອຍກວ່າ ຫຼື ເທົ່າກັບ 30 ວັນ, ທີ່ພ້ອມຈະປ່ຽນເປັນເງິນສົດໄດ້ ແລະ ບັນຊີໜີ້ຕ້ອງຮັບເງິນຝາກທະນາຄານອື່ນທີ່ມີອາຍຸຄົບກຳນົດໜ້ອຍກວ່າ ຫຼື ເທົ່າກັບ 30 ວັນ.

### (ຄ) ເງິນໃຫ້ກູ້ຢືມ ແລະ ເງິນລ່ວງໜ້າ

ເງິນໃຫ້ກູ້ຢືມ ແລະ ເງິນລ່ວງໜ້າ ແມ່ນມາຈາກການສະໜອງທຶນຂອງທະນາຄານໃຫ້ແກ່ລູກຄ້າເພື່ອ ຈຸດປະສົງໃດໜຶ່ງທີ່ນອກເໜືອຈາກການເກັບກຳໄລໄລຍະສັ້ນ. ເງິນໃຫ້ກູ້ຢືມ ແລະ ເງິນລ່ວງໜ້າໃຫ້ລູກຄ້າແມ່ນມາຈາກຍອດຄົງເຫຼືອຫັກລົບເງິນແຮຄ່າເສື່ອມສຳລັບໜີ້ເສຍ ແລະ ໜີ້ສົງໄສຈະສູນ ເງິນໃຫ້ກູ້ຢືມ ແລະ ເງິນລ່ວງໜ້າ, ສະທ້ອນ

ໃຫ້ເຫັນຍອດທີ່ສາມາດຮຽກເກັບຄືນໄດ້. ເງິນໃຫ້ກູ້ຢືມ ແລະ ເງິນລ່ວງໜ້າ ທີ່ໄດ້ສະແດງໃຫ້ເຫັນເຖິງສະເພາະສ່ວນດອກເບ້ຍທີ່ຄ້າງຮັບ.

**(ງ) ເງິນແຮສຳລັບໜີ້ເສຍ ແລະ ໜີ້ຕ້ອງສົງໃສ ເງິນກູ້ ແລະ ເງິນລ່ວງໜ້າ**

**ນຳໃຊ້ນະໂຍບາຍຈາກວັນທີ 1 ຕຸລາ 2018 - ທຫລ 512**

ອີງຕາມຂໍ້ຕົກລົງເລກທີ 512/ທຫລ ("ທຫລ 512") ລົງວັນທີ 29 ມິຖຸນາ 2018 ແລະ ມີຜົນບັງຄັບໃຊ້ເລີ່ມຈາກວັນທີ 1 ຕຸລາ 2018, ທະນາຄານຈຳເປັນຕ້ອງໄດ້ຈັດຊັ້ນໜີ້ເງິນກູ້ ແລະ ຫັກເງິນແຮສຳລັບຄ່າເສື່ອມຂາດທຶນ. ດັ່ງນັ້ນ, ເງິນກູ້ ຈຶ່ງໄດ້ຖືກຈັດຊັ້ນເປັນສິນເຊື່ອທີ່ເກີດດອກອອກຜົນ ຫຼື ສິນເຊື່ອທີ່ບໍ່ເກີດດອກອອກຜົນ ອີງຕາມສະຖານະຂອງເງິນຄ້າງຊຳລະ ແລະ ປັດໄຈດ້ານຄຸນນະພາບອື່ນໆ, ສິນເຊື່ອທີ່ຈັດຊັ້ນເປັນໜີ້ປົກກະຕິ (ກຸ່ມ A) ແມ່ນພິຈາລະນາເປັນສິນເຊື່ອທີ່ເກີດດອກອອກຜົນ, ເງິນກູ້ທີ່ຈັດຊັ້ນໜີ້ທີ່ຄວນເອົາໃຈໃສ່ (ກຸ່ມ B) ຫຼື ຕ່ຳກວ່າມາດຕະຖານ (ກຸ່ມ C) ຫຼື ໜີ້ສົງໄສ (ກຸ່ມ D) ຫຼື ໜີ້ສູນ (ກຸ່ມ E) ແມ່ນໄດ້ພິຈາລະນາເປັນສິນເຊື່ອທີ່ບໍ່ເກີດດອກອອກຜົນ.

ຕາມຂໍ້ຕົກລົງ ທຫລ 512, ທະນາຄານຕ້ອງໄດ້ສ້າງເງິນແຮທົ່ວໄປໃນອັດຕາຄົງທີ 0.5% ຂອງຍອດເຫຼືອທັງໝົດຂອງສິນເຊື່ອປົກກະຕິ ນະວັນທີ່ລາຍງານ, ຄວບຄູ່ກັນກັບ, ການຫັກເງິນແຮສະເພາະສຳລັບໜີ້ທີ່ຄວນເອົາໃຈໃສ່, ໜີ້ຕ່ຳກວ່າມາດຕະຖານ, ໜີ້ສົງໄສ ແລະ ໜີ້ສູນ ໂດຍຄູນກັບຍອດຍັງເຫຼືອຂອງເງິນກູ້ແຕ່ລະລາຍການຫັກດ້ວຍເງິນຄ້ຳປະກັນ (ຖ້າມີ) ເພື່ອໃຫ້ສອດຄ່ອງກັບຂໍ້ຕົກລົງຂອງ ທຫລ ແລະ ອັດຕາການຫັກເງິນແຮທີ່ນຳໃຊ້ ຕາມການຈັດຊັ້ນສິນເຊື່ອ ມີດັ່ງນີ້:

| **ການຈັດຊັ້ນໜີ້** | **ຈຳນວນມື້ເກີນກຳນົດຈ່າຍ** | **ອັດຕາການຫັກເງິນແຮ** |
|---|---|---|
| ໜີ້ປົກກະຕິ (A) | 0 – 29 ວັນ | 0.5% |
| ໜີ້ຄວນເອົາໃຈໃສ່ (B) | 30 – 89 ວັນ | 3% |
| ໜີ້ຕ່ຳກວ່າມາດຕະຖານ (C) | 90 – 179 ວັນ | 20% |
| ໜີ້ສົງໄສ (D) | 180 – 359 ວັນ | 50% |
| ໜີ້ສູນ (E) | ຫຼາຍກວ່າ 360 ວັນ | 100% |

ອັດຕາສ່ວນສິດທິປະໂຫຍດສູງສຸດຂອງຫຼັກຊັບຄ້ຳປະກັນທີ່ໄດ້ຮັບອະນຸຍາດ ພາຍໃຕ້ ທຫລ 512, ມີດັ່ງນີ້:

| **ປະເພດຂອງຫຼັກຊັບຄ້ຳປະກັນ** | **ອັດຕາສ່ວນສູງສຸດທີ່ໄດ້ຮັບອະນຸຍາດ** |
|---|---|
| (ກ) ເງິນຝາກກັບທະນາຄານ | |
| - ໃນສະກຸນດຽວກັບສິນເຊື່ອ | 100% |
| - ໃນສະກຸນເງິນທີ່ແຕກຕ່າງກັບສິນເຊື່ອ | 95% |
| (ຂ) ຝາກຄ້ຳໄວ້ກັບທະນາຄານ | 90% |
| (ຄ) ພັນທະບັດລັດຖະບານ ແລະ ພັນທະບັດ ທຫລ | |
| - ໃນສະກຸນດຽວກັບສິນເຊື່ອ | |
| ▪ ໄລຍະເວລາທີ່ເຫຼືອຕ່ຳກວ່າ 1 ປີ | 100% |
| ▪ ໄລຍະເວລາທີ່ເຫຼືອຢູ່ລະຫວ່າງ 1 ປີ ຫາ 5 ປີ | 90% |

| | |
|---|---|
| ▪ ໄລຍະເວລາທີ່ເຫຼືອຫຼາຍກວ່າ 5 ປີ<br>- ໃນສະກຸນເງິນທີ່ແຕກຕ່າງກັບສິນເຊື່ອ<br>▪ ໄລຍະເວລາທີ່ເຫຼືອຕໍ່າກວ່າ 1 ປີ<br>▪ ໄລຍະເວລາທີ່ເຫຼືອຢູ່ລະຫວ່າງ 1 ປີ ຫາ 5 ປີ<br>▪ ໄລຍະເວລາທີ່ເຫຼືອຫຼາຍກວ່າ 5 ປີ | 80%<br><br>95%<br>85%<br>75% |
| (ງ) ເງິນຝາກກັບທະນາຄານອື່ນ ຫຼື ສະຖາບັນການເງິນ<br>▪ ໄລຍະເວລາທີ່ເຫຼືອຕໍ່າກວ່າ 1 ປີ<br>▪ ໄລຍະເວລາທີ່ເຫຼືອຢູ່ລະຫວ່າງ 1 ປີ ຫາ 5 ປີ<br>▪ ໄລຍະເວລາທີ່ເຫຼືອຫຼາຍກວ່າ 5 ປີ | <br>80%<br>75%<br>70% |
| (ຈ) ໜັງສືສິນເຊື່ອ (LC) ຫຼື ໜັງສືສິນເຊື່ອແບບສຳຮອງ (SBLC) | 95% |
| (ສ) ໜັງສືຄ້ຳປະກັນ (LG) ຫຼື Bank Guarantee (BG) | 90% |
| (ຊ) ອະສັງຫາລິມະຊັບ | 40% |

ເພື່ອໃຫ້ສອດຄ່ອງກັບຫຼັກການບັນຊີທີ່ກ່ຽວຂ້ອງທີ່ອອກໂດຍ ທະນາຄານ ແຫ່ງ ສປປ ລາວ, ຖ້າຫາກມີການປ່ຽນແປງການຫັກເງິນແຮສຳລັບກິດຈະກຳສິນເຊື່ອ ແມ່ນຕ້ອງບັນທຶກໃນໃບລາຍງານຜົນການດຳເນີນງານ "ລາຍຈ່າຍຈາກການດຳເນີນການອື່ນໆ" ສຳລັບລາຍຈ່າຍເງິນແຮທົ່ວໄປ ແລະ "ລາຍຮັບຈາກການດຳເນີນການອື່ນໆ" ເພື່ອເກັບຄືນ ລາຍຈ່າຍເງິນແຮທົ່ວໄປ ແລະ ຍອດເຫຼືອຂອງເງິນແຮສຳຮອງທົ່ວໄປ ທີ່ຈະບັນທຶກໃນໃບສະຫຼຸບຊັບສິນບັດໃນ "ເງິນແຮທົ່ວໄປສຳລັບກິດຈະກຳສິນເຊື່ອ" ພາຍໃຕ້ທຶນ ແລະ ຄັງສຳຮອງຂອງ**ທະນາຄານ**.

**ທະນາຄານໄດ້ປະຕິບັດຕາມ ທທລ 324 ໃນການຫັກເງິນແຮທົ່ວໄປສຳລັບໜີ້ປົກກະຕິ ແລະ ໜີ້ທີ່ຄວນເອົາໃຈໃສ່ ສຳລັບຮອບໄລຍະກ່ອນວັນທີ 1 ຕຸລາ 2018.**

ອີງຕາມລະບຽບການ ສະບັບເລກທີ 324/ທທລ ("ທທລ324") ລົງວັນທີ 19 ເມສາ 2011. ແມ່ນຮຽກຮ້ອງໃຫ້ທະນາຄານຕ້ອງໄດ້ຈັດປະເພດເງິນກູ້ ແລະ ກຳນົດເງິນແຮສຳລັບໜີ້ເສຍ ແລະ ໜີ້ສົງໃສ ແລະ ເງິນລ່ວງໜ້າ. ຕາມເງິນໃຫ້ກູ້ຈຶ່ງໄດ້ຈັດແບ່ງອອກເປັນເງິນໃຫ້ກູ້ທີ່ເກີດດອກອອກຜົນ ຫຼື ເງິນໃຫ້ກູ້ທີ່ບໍ່ເກີດດອກ ອອກຜົນໂດຍອີງຕາມສະ ຖານະການຊຳລະເງິນກູ້ ແລະ ປັດໃຈອື່ນໆ. ການຈັດແບ່ງປະເພດໜີ້ ທັງໜີ້ປົກກະຕິ ຫຼື ໜີ້ບວກ (ກຸ່ມ A) ແລະ ໜີ້ຕິດຕາມ ຫຼື ໜີ້ທີ່ຄວນເອົາໃຈໃສ່ສະເພາະ (ກຸ່ມ B) ແມ່ນພິຈາລະນາວ່າເປັນໜີ້ທີ່ເກີດດອກອອກຜົນ ສ່ວນການຈັດແບ່ງປະເພດໜີ້ທີ່ຕ່ຳກວ່າມາດຕະຖານ (ກຸ່ມ C) ຫຼື ໜີ້ສົງໃສວ່າຈະສູນ (ກຸ່ມ D) ຫຼື ໜີ້ສູນເສຍ (ກຸ່ມ E) ແມ່ນໄດ້ພິຈາລະນາວ່າເປັນໜີ້ທີ່ບໍ່ເກີດດອກອອກຜົນ.

ອີງຕາມລະບຽບຂອງທະນາຄານກາງເລກທີ 324/ທທລ ແມ່ນໄດ້ກຳນົດເງິນແຮ່ສຳລັບ ໜີ້ສູນ. ໜີ້ສົງໃສຂອງເງິນກູ້ ແລະ ເງິນລ່ວງໜ້າ ໂດຍການເອົາຍອດເງິນກູ້ມາຄູນໃຫ້ອັດຕາເງິນແຮປ່ອຍກູ້ ການຈັດປະເພດເງິນກູ້ດັ່ງລຸ່ມນີ້:

| ການຈັດຊັ້ນໜີ້ | ຈຳນວນມື້ເກີນກຳນົດຈ່າຍ | ອັດຕາເງິນແຮ |
|---|---|---|
| ໜີ້ປົກກະຕິ (A) | 0 ຫາ 29 ວັນ | 0.5% - 1% |
| ໜີ້ຄວນເອົາໃຈໃສ່ (B) | 30 ຫາ 89 ວັນ | 3% |
| ໜີ້ຕ່ຳກວ່າມາດຕະຖານ (C) | 90 ຫາ 179 ວັນ | 20% |
| ໜີ້ສົງໄສວ່າຈະສູນ (D) | 180 ຫາ 359 ວັນ | 50% |
| ໜີ້ສູນ (E) | ເລີ່ມແຕ່ 360 ວັນຂຶ້ນໄປ | 100% |

ການຮຽກເກັບຄືນສິນເຊື່ອທີ່ໄດ້ລ້າງອອກຈາກບັນຊີ ແລະ ປື້ນກັບເງິນແຮແມ່ນໄດ້ເປີດເຜີຍເປັນການຫັກອອກຈາກເງິນແຮການກູ້ຢືມສຳລັບໜີ້ສູນ ແລະ ໜີ້ຕ້ອງສົງໃສ ແລະ ເງິນລ່ວງໜ້າໃນໃບລາຍງານຜົນໄດ້ຮັບ.

ອີງຕາມລະບຽບກົດໝາຍຂອງທະນາຄານ ແຫ່ງ ສປປ ລາວ ເລກທີ 324/ທຫລ ແມ່ນໄດ້ຮຽກຮ້ອງໃຫ້ທະນາຄານ ຕ້ອງມີເງິນແຮສຳຮອງທົ່ວໄປໃນອັດຕາ 3.0% ຂອງຍອດເງິນໃຫ້ກູ້ທັງໝົດຂອງໜີ້ທີ່ຄວນເອົາໃຈໃສ່ໃນເວລາທີ່ບັນທຶກໃນໃບສະຫຼຸບຊັບສົມບັດ ແລະ ເງິນແຮສຳຮອງແມ່ນເກີດ ຈາກໜີ້ປົກກະຕິ ຫຼື ໜີ້ສົງໃສ ແມ່ນຈະໄດຮັບແຈ້ງເຕືອນຈາກທະນາຄານ ແຫ່ງ ສປປ ລາວ ໃນແຕ່ລະປີ. ສຳລັບທ້າຍປີ ວັນທີ 31 ທັນວາ 2018 ແລະ 2017. ອີງຕາມໜັງສືເລກທີ 242/ທຫລ ອອກໂດຍທະນາຄານແຫ່ງ ສປປ ລາວ ລົງວັນທີ 02 ເມສາ 2011. ອັດຕາເງິນແຮສຳຮອງສຳລັບໜີ້ປົກກະຕິແມ່ນ ເລີ່ມ ຈາກ 0.5% ຫາ 1.0%. ແລະ ທາງທະນາຄານຕ້ອງໄດ້ຫັກເງິນແຮທົ່ວໄປໃນອັດຕາທີ່ 0.5% ຂອງຍອດໜີ້ປົກກະຕິ ຫຼື ໜີ້ສົງໃສ.

ທະນະຄານໄດ້ປະຕິບັດຕາມ BOL 324 ໃນການຕັ້ງເງິນແຮສຳຫລັບສິນເຊື່ອປົກກະຕິ ຫລື ຜ່ານ ແລະ ໃຫ້ລະວັງສິນເຊື່ອພິເສດໃນປີກໍ່ຄືກ່ອນວັນທີ 1 ຕຸລາ 2018.

ອີງຕາມລະບຽບການບັນຊີທີ່ກ່ຽວຂ້ອງຕາມກົດໝາຍແຫ່ງ ສປປ ລາວ ການປ່ຽນແປງໃນການສະນອງເງິນກູ້ທົ່ວໄປສຳຫລັບກິດຈະກຳການປ່ອຍສິນເຊື່ອຈະຖືກບັນທຶກໄວ້ໃນລາຍການລາຍຮັບ "ຄ່າໃຊ້ຈ່າຍໃນການດຳເນີນງານອື່ນໆ ສຳຫລັບຄ່າໃຊ້ຈ່າຍທົ່ວໄປ ແລະ ລາຍໄດ້ຈາກການດຳເນີນງານອື່ນ ຄ່າໃຊ້ຈ່າຍໃນການເງິນແຮ ແລະ ຍອດສຳຮອງເງິນແຮທົ່ວໄປບັນທຶກໄວ້ໃນໃບດຸ່ນດ່ຽງ "ການສະຫນອງສິນເຊື່ອທົ່ວໄປພາຍໃຕ້ທຶນສຳຮອງເງິນແຮຂອງທະນາຄານ

## (ຈ) ການລ້າງຫນີ້ສູນ

ເພື່ອໃຫ້ສອດຄ່ອງກັບ ທຫລ 512, ເງິນກູ້ຖືກລ້າງອອກ ຢ່າງຊ້າບໍ່ເກີນ 90 ວັນ ນັບຈາກມື້ຈັດຊັ້ນໜີ້ເປັນໜີ້ສູນ.

ການລ້າງເງິນກູ້ຈະບັນທຶກເປັນລາຍການຕິດຕາມນອກໃບສະຫຼຸບຊັບສົມບັດ ແລະ ຮຽກເກັບເງິນ, ຈຳນວນເງິນທີ່ຮຽກເກັບຈາກເງິນໃຫ້ສິນເຊື່ອ ທີ່ລ້າງກ່ອນໜ້ານີ້, ຊຶ່ງລວມເຖິງເງິນທີ່ໄດ້ຈາກການຂາຍຫຼັກຊັບຄ້ຳປະກັນກັບໜີ້ເຫຼົ່ານັ້ນ, ຈະຮັບຮູ້ໃນໃບລາຍງານຜົນການດຳເນີນງານ ເມື່ອໄດ້ຮັບ.

**(ສ) ການຫັກເງິນແຮສໍາລັບພາລະຜູກພັນທາງການເງິນນອກໃບສະຫຼຸບຊັບສິນບັດ**

ເພື່ອໃຫ້ສອດຄ່ອງກັບ ທທລ 512, ທະນາຄານບໍ່ຕ້ອງເຮັດການຫັກເງິນແຮ ສໍາລັບພາລະຜູກພັນທາງການເງິນນອກໃບສະຫຼຸບຊັບສິນບັດ, ຍົກເວັ້ນແຕ່ຖ້າທະນາຄານ ໄດ້ເຮັດຊໍາລະເງິນຕາມສັນຍາຄໍ້າປະກັນແທນລູກຄ້າ, ຊຶ່ງໃນກໍລະນີຊໍາລະແມ່ນໃຫ້ຈັດຊັ້ນແລະ ຫັກເງິນແຮ ສໍາລັບຂາດທຶນສິນເຊື່ອ ເພື່ອເຮັດໃຫ້ສອດຄ່ອງກັບນະໂຍບາຍການບັນຊີ ທີ່ລະບຸໄວ້ໃນບົດອະທິບາຍຊ້ອນທ້າຍຂໍ້ທີ 4 (ສ).

**(ຊ) ທຸລະກໍາລະຫວ່າງທະນາຄານ ແລະ ຕະຫຼາດເງິນ**

ທຸລະກໍາລະຫວ່າງທະນາຄານ ແລະ ຕະຫຼາດເງິນ ແມ່ນຖືກບັນທຶກຕາມມູນຄ່າຕົວຈິງ.

**(ຍ) ຄັງສໍາຮອງຕາມລະບຽບການ**

ອີງຕາມກົດໝາຍວ່າດ້ວຍ ທະນາຄານທຸລະກິດ ລົງວັນທີ 16 ມັງກອນ 2007, ບັນດາທະນາຄານທຸລະກິດ ແມ່ນຮຽກຮ້ອງໃຫ້ມີຄັງສໍາຮອງກໍາໄລສຸດທິ ດັ່ງນີ້:

- ກອງທຶນຄັງສໍາຮອງຕາມລະບຽບການ
- ກອງທຶນເພື່ອຂະຫຍາຍທຸລະກິດ ແລະ ອື່ນໆ

ອີງຕາມກົດໝາຍວິສາຫະກິດ (ສະບັບປັບປຸງ) ເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013, ຄັງແຮສໍາຮອງຕາມລະບຽບການຕ້ອງໄດ້ຮັກສາໄວ້ໃນອັດຕາ 10% ຂອງກໍາໄລພາຍຫຼັງທີ່ໄດ້ຫັກເງິນຂາດທຶນສະສົມ. ທະນາຄານ ສາມາດຢຸດການຫັກເງິນແຮສໍາຮອງ ເມື່ອຄັງສໍາຮອງຕາມລະບຽບການສະສົມເຖິງ 50 ເປີເຊັນຂອງທຶນຈົດທະບຽນ.

**(ດ) ຊັບສິນບັດຄົງທີ່ມີຕົວຕົນ**

(i) ລາຍການຊັບສິນບັດຄົງທີ່ມີຕົວຕົນ ແມ່ນບັນທຶກຕາມມູນຄ່າຕົ້ນທຶນລົບໃຫ້ຄ່າຫຼຸ້ຍຫ້ຽນສະສົມ ແລະ ຄ່າເສື່ອມມູນຄ່າສະສົມ (ຖ້າມີ). ຖ້າຫາກລາຍການຂອງຊັບສິນບັດຄົງທີ່ມີຕົວຕົນ ມີຫຼາຍຊິ້ນສ່ວນທີ່ມີອາຍຸການໃຊ້ງານຕ່າງກັນ ແມ່ນໃຫ້ແຍກແຕ່ລະລາຍການຂອງຊັບສິນບັດຄົງທີ່ມີຕົວຕົນ.

(ii) ອີງຕາມກົດໝາຍວ່າດ້ວຍສ່ວຍສາອາກອນສະບັບປັບປຸງ ເລກທີ 70/ນຍ ລົງວັນທີ 15 ທັນວາ 2015 ເຊິ່ງມີຜົນບັງຄັບໃຊ້ແຕ່ວັນທີ 24 ພຶດສະພາ 2016 ເຊິ່ງກໍານົດໂດຍປະທານສະພາແຫ່ງຊາດ, ຄ່າຫຼຸ້ຍຫ້ຽນຂອງຊັບສິນບັດຄົງທີ່ ແມ່ນບັນທຶກໃນໃບລາຍງານຜົນການດໍາເນີນງານ ໂດຍນໍາໃຊ້ການຄິດໄລ່ແບບສະເໝີຕົວຕາມອາຍຸການໃຊ້ງານຂອງຊັບສິນບັດນັ້ນໆ ໃນອັດຕາເປີເຊັນຕໍ່ປີດັ່ງລຸ່ມນີ້:

| | |
|---|---|
| ສ່ວນປັບປຸງສິດທີ່ໃຫ້ເຊົ່າ | 5% |
| ອຸປະກອນໄຟຟ້າ | 20% |
| ເຄື່ອງເຟີນີເຈີ, ເຄື່ອງຕິດຕັ້ງ ແລະ ເຄື່ອງໃຊ້ຫ້ອງການ | 20% |
| ຍານພາຫະນະ | 20% |

(iii) ລາຍຈ່າຍພາຍຫຼັງທີ່ກ່ຽວຂ້ອງກັບລາຍການຊັບສິນບັດຄົງທີ່ຮັບຮູ້ແລ້ວ ຈະຖືກຮັບຮູ້ເປັນຊັບສິນໄດ້ກໍ່ເມື່ອເຫັນວ່າສາມາດເກີດປະໂຫຍດທາງເສດຖະກິດໃນອະນາຄົດ, ສາມາດເພີ່ມປະສິດທິພາບຂອງຊັບສິນເດີມຂອງທະນາຄານ. ສ່ວນຄ່າໃຊ້ຈ່າຍອື່ນໆ ທີ່ຕາມມາແມ່ນໃຫ້ບັນທຶກເປັນລາຍຈ່າຍໃນໄລຍະທີ່ເກີດຂຶ້ນ.

(iv) ກຳໄລ ຫຼື ຂາດທຶນທີ່ເກີດຈາກການໝົດອາຍຸ ຫຼື ສະສາງ ບັນດາຊັບສິນບັດຄົງທີ່ອອກ ແມ່ນບັນທຶກສ່ວນແຕກຕ່າງລະຫວ່າງລາຄາຄາດຄະເນສຸດທິ ທີ່ສະສາງອອກກັບມູນຄ່າຍັງເຫຼືອຂອງຊັບສິນນັ້ນ ແລະ ສ່ວນແຕກຕ່າງ ດັ່ງກ່າວແມ່ນໄດ້ບັນທຶກລົງໃນໃບລາຍງານຜົນການດຳເນີນງານຕາມວັນທີທີ່ຊັບສິນບັດດັ່ງກ່າວໝົດອາຍຸ ຫຼື ຖືກສະສາງອອກ.

(v) ຄ່າຫຼຸ້ຍຫ້ຽນຂອງຊັບສິນບັດຄົງທີ່ທີ່ຫັກຄົບຕາມກຳນົດແລ້ວແມ່ນໄດ້ນຳສະເໜີຢູ່ໃນໃບລາຍງານຖານະການເງິນຈົນກວ່າມີການຊຳລະສະສາງ ແລະ ລ້າງອອກຈາກບັນຊີ.

## (ຓ) ການຮັບຮູ້ລາຍຮັບ

ລາຍຮັບດອກເບ້ຍແມ່ນຮັບຮູ້ຕາມຫຼັກການຄ້າງຮັບຄ້າງຈ່າຍປະຈຳວັນ, ຍົກເວັ້ນກໍລະນີທີ່ບັນຊີດັ່ງກ່າວໄດ້ກາຍເປັນບັນຊີທີ່ບໍ່ເກີດດອກອອກຜົນ. ເມື່ອບັນຊີດັ່ງກ່າວກາຍມາເປັນບັນຊີທີ່ບໍ່ເກີດດອກອອກຜົນ, ການບັນທຶກລາຍຮັບດອກເບ້ຍ ມາເປັນລາຍຮັບພັກໄວ້ ຈົນກວ່າຈະເກີດມີການຮັບຮູ້ເງິນສົດ. ບັນຊີຂອງລູກຄ້າທີ່ຖືກພິຈາລະນາເປັນບັນຊີທີ່ບໍ່ເກີດດອກອອກຜົນ ເມື່ອບໍ່ມີການຊຳລະເງິນຕົ້ນເກີນກຳນົດ 90 ວັນ, ອີງຕາມກົດລະບຽບຂອງທຫລ.

ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການທາງການເງິນ ແມ່ນລວມມີຄ່າທຳນຽມທີ່ໄດ້ຮັບຈາກການເຄື່ອນໄຫວເງິນໂອນຕ່າງໆ, ການຊຳລະສະສາງທາງການຄ້າ, ການແລກປ່ຽນເງິນຕາຕ່າງປະເທດ, ລາຍການເຄື່ອນໄຫວຕູ້ກົດເງິນສົດ ແລະ ໜັງສືຮັບຮອງທາງການເງິນ. ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການທາງການເງິນ ແມ່ນໄດ້ຮັບຮູ້ໃນໃບລາຍງານຜົນໄດ້ຮັບຕາມຫຼັກການເງິນສົດ.
ລາຍຮັບຈາກການໃຫ້ບໍລິການຕ່າງໆຂອງທະນາຄານແມ່ນໄດ້ຕັ້ງຄ້າງຮັບຕາມມາດຕະຖານດັ່ງລຸ່ມນີ້:

(i) ຄ່າທຳນຽມ ແລະ ຄ່າບໍລິການ ໃນການຈັດສິນເຊື່ອພ້ອມທັງສິ່ງອຳນວຍຄວາມສະດວກອື່ນໆ ທີ່ໃຫ້ບໍລິການແກ່ລູກຄ້າແມ່ນຮັບຮູ້ເມື່ອມີການເຄື່ອນໄຫວດັ່ງກ່າວ;
(ii) ຄ່າທຳນຽມຂໍ້ຜູກມັດ ແລະ ຄ່າຮັບປະກັນ ພ້ອມກັບສິ່ງອຳນວຍຄວາມສະດວກອື່ນໆ ທີ່ໃຫ້ບໍລິການແກ່ລູກຄ້າແມ່ນ ຮັບຮູ້ເມື່ອມີການເຄື່ອນໄຫວດັ່ງກ່າວ; ແລະ
(iii) ຄ່າບໍລິການ ແລະ ຄ່າຈັດການ ແມ່ນໄດ້ຮັບຮູ້ ເມື່ອການເຄື່ອນໄຫວດັ່ງກ່າວເກີດຂຶ້ນ.

## (ຖ) ລາຍຈ່າຍດອກເບ້ຍ

ລາຍຈ່າຍດອກເບ້ຍຂອງເງິນຝາກແມ່ນໄດ້ຮັບຮູ້ຕາມຫຼັກການຄ້າງຮັບຄ້າງຈ່າຍປະຈຳວັນ.

## (ທ) ອາກອນກຳໄລ

ລາຍຈ່າຍອາກອນປະກອບດ້ວຍ ອາກອນໃນປີ ແລະ ອາກອນເຍື້ອນຊຳລະ. ອາກອນໃນປີ ແລະ ອາກອນເຍື້ອນຊຳລະ ແມ່ນຖືກຮັບຮູ້ໃນກຳໄລ ຫຼື ຂາດທຶນ.

**ອາກອນໃນປີ**

ອາກອນໃນປີ ແມ່ນຄິດໄລ່ຕາມກົດໝາຍອາກອນ ຫຼື ຕາມບັນຍັດ ໃນວັນທີທີ່ປະກົດໃນໃບລາຍງານຖານະການເງິນ. ຜູ້ບໍລິຫານໄດ້ຕີລາຄາສະຖານະການທີ່ກົດໝາຍອາກອນໃນປັດຈຸບັນ ອາດມີການຕີຄວາມໝາຍທີ່ແຕກຕ່າງກັນເປັນແຕ່ລະໄລຍະ, ທັງໄດ້ມີການກະກຽມເງິນແຮໄວ້ ໃນກໍລະນີທີ່ເກີດມີຈຳນວນເງິນທີ່ຕ້ອງຈ່າຍເພີ່ມເຕີມ ໃຫ້ແກ່ກົມສ່ວຍສາອາກອນ.

ອາກອນໃນປີ ແມ່ນຄິດໄລ່ຈາກລາຍຮັບທັງໝົດໃນປີປະຈຸບັນ ໂດຍອີງຕາມກົດໝາຍສ່ວຍສາອາກອນຂອງ ສປປ ລາວ ສຳລັບກຳໄລໃນແຕ່ລະປີ ທະນາຄານຈະຕ້ອງຈ່າຍອາກອນກຳໄລໃນອັດຕາ 24% ຂອງກຳໄລທັງໝົດກ່ອນການຄິດໄລ່ອາກອນ.

**ອາກອນເຍື້ອນຊຳລະ**

ອາກອນເຍື້ອນຊຳລະ ຖືກຮັບຮູ້ໂດຍສ່ວນຕ່າງຊົ່ວຄາວລະຫວ່າງ ຍອດຍົກມາຂອງຊັບສິນ ແລະ ໜີ້ສິນ ສຳລັບຈຸດປະສົງ ໃນການລາຍງານທາງການເງິນ ແລະ ຈຳນວນເງິນທີ່ຖືກໃຊ້ ສຳລັບການໄລ່ອາກອນ.

ການວັດແທກມູນຄ່າອາກອນເຍື້ອນຊຳລະ ສະທ້ອນໃຫ້ເຫັນຜົນກະທົບທາງດ້ານອາກອນ ທີ່ຈະເປັນໄປຕາມຮູບແບບທີ່ທາງທະນາຄານ ຄາດວ່າຈະໄດ້ຮັບຄືນ, ໃນມື້ລາຍງານທ້າຍປີ ເພື່ອຮັບປະກັນ ຫຼື ຊຳລະໜີ້ສິນ ທີ່ຍັງເຫຼືອຂອງຊັບສິນ ແລະ ໜີ້ສິນ.ອັດຕາອາກອນເຍື້ອນຊຳລະ ແມ່ນຖືກຄິດໄລ່ຕາມອັດຕາ ທີ່ຍອມຮັບໃນສ່ວນທີ່ຜິດດ່ຽງຊົ່ວຄາວ ໃນເວລາທີ່ບັນທຶກບັນຊີ ໂດຍອັດຕາທີ່ໃຊ້ຄິດໄລ່ອາກອນ ອີງຕາມກົດໝາຍທີ່ລະບຸໄວ້ແທ້ຈິງ ໃນມື້ທີ່ລາຍງານການເສຍອາກອນ.

ຊັບສິນ ແລະ ໜີ້ສິນ ອາກອນເຍື້ອນຊຳລະ ຖືກລົບລ້າງກັນກໍ່ຕໍ່ເມື່ອມີສິດຜົນບັງຄັບໃຊ້ທາງກົດໝາຍ ເພື່ອລົບລ້າງໜີ້ສິນ ແລະ ຊັບສິນພາຍໃນປີ ເຊິ່ງກ່ຽວພັນການເກັບພາສີຂອງເຈົ້າໜ້າທີ່ສ່ວຍສາອາກອນ ໃນສ່ວນທີ່ມີຈິງ ຫຼື ສ່ວນທີ່ແຕກຕ່າງ ຂອງການເສຍອາກອນເຊັ່ນດຽວກັນ. ແຕ່ວ່າພວກເຂົາໄດ້ຕັ້ງໃຈຊຳລະໜີ້ສິນ ແລະ ຊັບສິນພາຍໃນປີ ຕາມພື້ນຖານລາຍໄດ້ທີ່ຫັກພາສີ ຫຼື ຊັບສິນ ແລະ ໜີ້ສິນ ຂອງພວກເຂົາຈະຖືກຮັບຮູ້ພ້ອມໆກັນ.

ຊັບສິນອາກອນເຍື້ອນຊຳລະ ໃຊ້ສຳລັບບັນດາອາກອນທີ່ບໍ່ໄດ້ຈ່າຍຍ້ອນຂາດທຶນ, ຍອດຍົກໄປຂອງອາກອນທີ່ຈ່າຍເກີນ ແລະ ລາຍຈ່າຍທີ່ຖືກຍົກເວັ້ນອາກອນ, ໝາຍຄວາມວ່າອາກອນກຳໄລຈະຖືກຄິດໄລ່ ໂດຍຫັກບັນດາອາກອນທີ່ບໍ່ໄດ້ຈ່າຍຍ້ອນຂາດທຶນ. ຍອດຍົກໄປຂອງອາກອນ ແລະ ລ່າຍຈ່າຍທີ່ຖືກຍົກເວັ້ນອາກອນໃນອະນາຄົດທີ່ສາມາດຍອມຮັບໄດ້. ຊັບສິນອາກອນເຍື້ອນຊຳລະ ພິຈາລະນາໃນແຕ່ລະມື້ທີ່ມີການລາຍງານ ແລະ ຖືກລົບລ້າງອອກ ໃນອາກອນກຳໄລທີ່ກ່ຽວຂ້ອງກັບຜົນປະໂຫຍດຂອງອາກອນລາຍໄດ້ ຢ່າງແທ້ຈິງ.

**(ນ) ເງິນແຮ**

ເງິນແຮ ຈະຖືກຮັບຮູ້, ຖ້າເປັນຜົນຂອງການດຳເນີນງານທີ່ຜ່ານມາ, ທະນາຄານມີພັນທະຕາມກົດໝາຍ ຫຼື ໜີ້ສິນທີ່ອາດຈະເກີດຂຶ້ນ ໃນປະຈຸບັນ ຊຶ່ງສາມາດປະເມີນໄດ້ຢ່າງໜ້າເຊື່ອຖື ແລະ ມີຄວາມເປັນໄປໄດ້ຂ້ອນຂ້າງແນ່ນອນ ທີ່ທະນາຄານຈະຕ້ອງໄດ້ຈ່າຍຜົນຕອບແທນທີ່ເປັນເງິນເພື່ອຊຳລະໜີ້ສິນ ດັ່ງກ່າວ. ເງິນແຮພິຈາລະນາຈາກສ່ວນຫຼຸດກະແສເງິນສົດໃນອະນາຄົດ ໂດຍໃຊ້ອັດຕາຄິດໄລ່ກ່ອນຫັກອາກອນ ຊຶ່ງສະທ້ອນການປະເມີນຄວາມສ່ຽງ ຂອງຕະຫຼາດໃນປະຈຸບັນ ຂອງມູນຄ່າຕາມເວລາຂອງເງິນ ແລະ ຄວາມສ່ຽງສະເພາະທີ່ກ່ຽວຂ້ອງກັບໜີ້ສິນ.

## (ບ) ພາກສ່ວນທີ່ກ່ຽວຂ້ອງ

ພາກສ່ວນທີ່ກ່ຽວຂ້ອງ ແມ່ນພາກສ່ວນທີ່ມີຄວາມອາດສາມາດໂດຍທາງກົງ ຫຼື ທາງອ້ອມຈະຄວບຄຸມພາກສ່ວນອື່ນ ຫຼື ມີອຳນາດທີ່ພົ້ນເດັ່ນ ຕໍ່ກັບພາກສ່ວນອື່ນທີ່ກ່ຽວຂ້ອງກັນກັບ ການຕັດສິນໃຈກ່ຽວກັບການເງິນ ແລະ ການດຳເນີນງານ ຫຼື ທະນາຄານ ພ້ອມກັບພາກສ່ວນດັ່ງກ່າວ ມີການຄວບຄຸມຮ່ວມກັນ ຫຼື ມີອຳນາດທີ່ພົ້ນເດັ່ນ. ພາກສ່ວນທີ່ກ່ຽວຂ້ອງ ອາດເປັນບຸກຄົນ ຫຼື ບໍລິສັດ ແລະ ລວມທັງສະມາຊິກຄອບຄົວຂອງບຸກຄົນໃດໜຶ່ງທີ່ຖືວ່າເປັນພາກສ່ວນທີ່ກ່ຽວຂ້ອງ.

## (ປ) ສິດທິຜົນປະໂຫຍດຂອງພະນັກງານ

***ຜົນປະໂຫຍດພາຍຫຼັງອອກການ***

ຜົນປະໂຫຍດພາຍຫຼັງອອກການ ແມ່ນຈະຖືກຈ່າຍໃຫ້ກັບພະນັກງານຂອງທະນະຄານທີ່ກະສຽນໂດຍຫ້ອງການກອງທຶນປະກັນສັງຄົມແຫ່ງຊາດ (ຫກປຊ) ເຊິ່ງຂຶ້ນກັບກະຊວງແຮງງານ ແລະ ສະຫວັດດີການສັງຄົມ. ທະນາຄານໄດ້ປະກອບສ່ວນ ໃນການໃຫ້ສິດທິຜົນປະໂຫຍດພາຍຫຼັງອອກການ ໂດຍການຈ່າຍເບ້ຍປະກັນສັງຄົມເປັນເດືອນ ໃນອັດຕາ 6.00% ຂອງເງິນເດືອນ (ເພດານສູງສຸດຂອງ ຫກປຊ ແມ່ນ 4.500.000 ກີບ, ອັດຕາສູງສຸດໃໝ່ມີຜົນຕັ້ງແຕ່ວັນທີ 01 ມັງກອນ 2017). ທະນາຄານ ບໍ່ມີພັນທະເພີ່ມເຕີມຕໍ່ກັບການໃຫ້ຜົນປະໂຫຍດພະນັກງານພາຍຫຼັງອອກການ ນອກຈາກນີ້.

*ຜົນປະໂຫຍດຈາກການເລີກຈ້າງ*

ອີງຕາມມາດຕາທີ 82 ຂອງກົດໝາຍວ່າດ້ວຍ ແຮງງານ ສະບັບປັບປຸງທີ່ອອກວັນທີ 24 ທັນວາ 2013 ໂດຍປະທານປະເທດຂອງ ສປປລາວ. ທະນາຄານມີພັນທະທີ່ຕ້ອງຈ່າຍເງິນອຸດໜູນໃຫ້ພະນັກງານທີ່ຖືກຍົກເລີກສັນຍາແຮງງານ ໃນກໍລະນີດັ່ງຕໍ່ໄປນີ້:

- ພະນັກງານທີ່ຂາດຄວາມຊຳນິຊຳນານພິເສດ ຫຼື ສຸຂະພາບບໍ່ແຂງແຮງ ແລະ ຫຼັງຈາກຊ່ວຍຊັບຊ້ອນໃຫ້ປະຕິບັດງານ ໃນການດຳເນີນງານທີ່ເໝາະສົມອື່ນໆ ເພີ່ມເຕີມຕາມຄວາມສາມາດ ແລະ ສຸຂະພາບ ແລະ ບຸກຄົນ ດັ່ງກ່າວຍັງມີບັນຫາ ຄືຍັງບໍ່ສາມາດເຮັດວຽກຕໍ່ໄດ້.
- ນາຍຈ້າງພິຈາລະນາເຫັນວ່າມີຄວາມຈຳເປັນທີ່ຈະຕ້ອງຫຼຸດຈຳນວນພະນັກງານເພື່ອປັບປຸງ ການເຮັດວຽກໃນຫົວໜ່ວຍແຮງງານຫຼັງຈາກປຶກສາສະພາບການຄ້າ ຫຼື ຕົວແທນພະນັກງານ ຫຼື ພະນັກງານສ່ວນໃຫຍ່ ແລະ ໄດ້ລາຍງານ ໄປຍັງໜ່ວຍງານບໍລິຫານ.

ສຳລັບການຍົກເລີກສັນຍາແຮງງານຕາມເງື່ອນໄຂທີ່ກ່າວມາຂ້າງເທິງ, ນາຍຈ້າງຕ້ອງຈ່າຍເງິນຊົດເຊີຍໃຫ້ຜູ້ອອກແຮງງານ ທີ່ຢຸດເຊົາວຽກເຊິ່ງຄິດໄລ່ໃນເກນ 10% ຂອງເງິນເດືອນພື້ນຖານກ່ອນການຢຸດເຊົາວຽກ ຄູນດ້ວຍຈຳນວນຂອງເດືອນທີ່ໄດ້ເຮັດວຽກ. ວັນທີ 31 ທັນວາ 2018 ມີພະນັກງານ 18 ຄົນທີ່ຖືກຍົກເລີກສັນຍາແຮງງານຕາມທີ່ກ່າວໄວ້ຂ້າງເທິງ, ທະນາຄານໄດ້ຈ່າຍເງິນໃຫ້ພະນັກງານເຫຼົ່ານັ້ນແລ້ວ ດັ່ງນັ້ນ ທະນາຄານ ຈຶ່ງບໍ່ໄດ້ຕັ້ງເງິນແຮສຳລັບ ເງິນອຸດໜູນການຢຸດເຊົາວຽກໃນໃບລາຍງານຖານະການເງິນ.

### (ຜ) ຊັບສິນບັດເພື່ອຂາຍ

ຊັບສິນບັດຄົງເພື່ອຂາຍລວມມີບັນດາຄ່າຊັບສິນບັດຄົງ ເຊິ່ງຖືກວັດແທກຕາມມູນຄ່າຕ່ຳສຸດ ຂອງມູນຄ່າຕາມບັນຊີ ຫຼື ຕາມມູນຄ່າຕະຫລາດຫັກຕົ້ນທຶນຂາຍ. ມູນຄ່າຍຸດຕິທຳແມ່ນໄດ້ອີງຕາມການປະເມີນມູນຄ່າພາຍໃນ ແລະ ຜູ້ປະເມີນມູນຄ່າພາຍນອກ. ຄ່າເຊື່ອມມູນຄ່າຊັບສິນບັດຄົງເພື່ອຂາຍແມ່ນຖືກບັນທຶກໃນບົດລາຍງານຜົນໄດ້ຮັບ. ກຳໄລຫຼືຂາດທຶນຈາກການຂາຍ ແລະ ຖືກຮັບຮູ້ໃນບົດລາຍງານຜົນໄດ້ຮັບຂອງທະນາຄານ.

## 5. ເງິນສົດ

| | 2018<br>*(ລ້ານກີບ)* | 2017<br>*(ລ້ານກີບ)* |
|---|---|---|
| ລາວກີບ ("LAK") | 4.354 | 14.254 |
| ໂດລາສະຫາລັດ ("USD") | 9.214 | 15.060 |
| ໄທບາດ ("THB") | 791 | 3.545 |
| ອື່ນໆ | 428 | 300 |
| | **14.787** | **33.159** |

## 6. ໜີ້ຕ້ອງຮັບຈາກທະນາຄານອື່ນໆ

| | 2018<br>*(ລ້ານກີບ)* | 2017<br>*(ລ້ານກີບ)* |
|---|---|---|
| ລາວກີບ ("LAK") | 179.910 | 60.900 |
| ສະກຸນເງິນອື່ນໆ | 18.633 | 143.199 |
| | **198.543** | **204.099** |

### ກ. ລາຍການພາຍໃນປະເທດ

| | 2018<br>*(ລ້ານກີບ)* | 2017<br>*(ລ້ານກີບ)* |
|---|---|---|
| ຕາມເວລາຮຽກເກັບ | 66.034 | 61.898 |
| ເງິນຝາກມີກຳນົດ | 115.000 | 107.562 |
| | **181.034** | **169.460** |

**ຂ.	ລາຍການຕ່າງປະເທດ**

| | 2018 *(ລ້ານກີບ)* | 2017 *(ລ້ານກີບ)* |
|---|---|---|
| ໂດລາສະຫະລັດ | 3.958 | 13.246 |
| ໄທບາດ | 11.318 | 18.745 |
| ອື່ນໆ | 2.233 | 2.648 |
| | **17.509** | **34.639** |

ເງິນຝາກກະແສລາຍວັນ ຢູ່ທະນາຄານພາຍໃນ ແລະ ຕ່າງປະເທດ ແມ່ນເປັນເງິນທີ່ບໍ່ມີດອກເບ້ຍ.

## 7.	ເງິນຝາກຕາມລະບຽບການກັບທະນາຄານກາງ.

| | 2018 *(ລ້ານກີບ)* | 2017 *(ລ້ານກີບ)* |
|---|---|---|
| ເງິນຝາກຕາມລະບຽບການ: | | |
| ເງິນຝາກບັງຄັບ | 52.419 | 76.683 |
| ເງິນຝາກກະແສລາຍວັນ | 35.300 | 166.704 |
| | **87.719** | **243.387** |

ຍອດເຫຼືອກັບ ທຫລ ລວມມີ ເງິນຝາກບັງຄັບ ແລະ ເງິນຝາກກະແສລາຍວັນ. ເງິນຝາກເຫຼົ່ານີ້ ແມ່ນບໍ່ມີດອກເບ້ຍ.

ພາຍໃຕ້ກົດລະບຽບຂອງ ທຫລ, ທະນາຄານແມ່ນໄດ້ຖືກຮຽກຮ້ອງໃຫ້ມີການຮັກສາເງິນສົດໄວ້ກັບທຫລ ໃນຮູບແບບຂອງບັນຊີເງິນຝາກແຮບັງຄັບ, ຊຶ່ງຄິດໄລ່ ໃນອັດຕາ 5% ສຳລັບສະກຸນກີບ ແລະ 10% ສຳລັບສະກຸນເງິນຕາຕ່າງປະເທດ (2017: 5% ແລະ 10%), ໃນທຸກໆສອງຄັ້ງຕໍ່ເດືອນ ຂອງເງິນຝາກທັງໝົດຂອງລູກຄ້າທີ່ມີກຳນົດໄລຍະເວລາໜ້ອຍກວ່າ 12 ເດືອນ, ໃນລະຫວ່າງປີ, ທາງທະນາຄານໄດ້ຮັກສາເງິນຝາກບັງຄັບຕາມລະບຽບການ ເພື່ອໃຫ້ສອດຄ່ອງກັບຂໍ້ກຳນົດຂອງ ທຫລ.

## 8. ເງິນໃຫ້ກູ້ຢືມ ແລະ ເງິນລ່ວງໜ້າ ໃຫ້ແກ່ລູກຄ້າ, ສຸດທິເງິນແຮສະເພາະ.

| | 2018<br>*(ລ້ານກີບ)* | 2017<br>*(ລ້ານກີບ)* |
|---|---|---|
| ເງິນໃຫ້ກູ້ຢືມ ແລະ ໜີ້ຕ້ອງຮັບ: | | |
| ເງິນເບີກເກີນບັນຊີ | 659 | 678 |
| ເງິນໃຫ້ກູ້ຢືມ | 230.948 | 162.157 |
| | **231.607** | **162.835** |
| ເງິນແຮສຳລັບໜີ້ເສຍ ແລະ ໜີ້ສົງໄສ | | |
| ເງິນໃຫ້ກູ້ຢືມ ແລະ ເງິນລ່ວງໜ້າ | | |
| ເງິນແຮສະເພາະ | - | - |
| ເງິນໃຫ້ກູ້ຢືມ ແລະ ເງິນລ່ວງໜ້າແກ່ລູກຄ້າ | **231.607** | **162.835** |

### ກ. ຈັດປະເພດຕາມອາຍຸຂອງສິນເຊື່ອທີ່ຍັງເຫຼືອ

| | 2018<br>*(ລ້ານກີບ)* | 2017<br>*(ລ້ານກີບ)* |
|---|---|---|
| ພາຍໃນ 1 ປີ | 159.967 | 134.179 |
| ເກີນ 1 ປີ | 71.640 | 28.656 |
| | **231.607** | **162.835** |

### ຂ. ຈັດປະເພດຕາມສະກຸນເງິນ

| | 2018<br>*(ລ້ານກີບ)* | 2017<br>*(ລ້ານກີບ)* |
|---|---|---|
| ກີບ | 196.716 | 157.008 |
| ໂດລາສະຫະລັດ | 34.891 | 5.827 |
| | **231.607** | **162.835** |

## 8 ເງິນໃຫ້ກູ້ຢືມ ແລະ ເງິນລ່ວງໜ້າ ໃຫ້ແກ່ລູກຄ້າ, ສຸດທິເງິນແຮສະເພາະ (ຕໍ່)

### ຄ ແຍກຕາມປະເພດທຸລະກິດ

| | 2018 *(ລ້ານກີບ)* | 2017 *(ລ້ານກີບ)* |
|---|---|---|
| ກະສິກຳ | - | 9.546 |
| ອຸດສະຫະກຳ | 29.226 | 40.274 |
| ການຄ້າ ແລະ ການບໍລິການ | 202.381 | 110.783 |
| ອື່ນໆ | - | 2.232 |
| | **231.607** | **162.835** |

### ງ. ຈັດປະເພດຕາມຜົນການດຳເນີນງານ

| | 2018 *(ລ້ານກີບ)* | 2017 *(ລ້ານກີບ)* |
|---|---|---|
| ເງິນກູ້ເກີດດອກອອກຜົນ | 231.607 | 162.835 |
| | **231.607** | **162.835** |

### ຈ. ຈັດປະເພດຕາມອັດຕາດອກເບ້ຍ (ຕໍ່ປີ)

| | 2018 % | 2017 % |
|---|---|---|
| ເງິນກູ້: | | |
| ກີບ | 4.25 – 8.00 | 4.25 – 16.00 |
| ໂດລາ | 4.00 – 10.00 | 4.00 – 10.00 |
| ບາດ | 4.00 – 10.00 | 4.00 – 10.00 |

**ເງິນແຮສະເພາະ ສຳລັບກິດຈະກຳສິນເຊື່ອ**

| | 2018 *(ລ້ານກີບ)* | 2017 *(ລ້ານກີບ)* |
|---|---|---|
| ຍອດເຫຼືອຕົ້ນປີ | - | 8.197 |
| ສ່ວນຜິດດ່ຽງຈາກການແລກປ່ຽນເງິນຕາ | - | 108 |
| ເງິນແຮທີ່ເກີດຂຶ້ນໃນປີ | - | 8.140 |
| ສະສາງໂດຍກົງ | - | (16.445) |
| **ຍອດເຫຼືອໃນທ້າຍປີ** | - | - |

**ເງິນແຮທົ່ວໄປ ສຳລັບກິດຈະກຳສິນເຊື່ອ**

| | 2018<br>*(ລ້ານກີບ)* | 2017<br>*(ລ້ານກີບ)* |
|---|---|---|
| ຍອດເຫຼືອຕົ້ນປີ | 1.629 | 1.731 |
| ສ່ວນຜິດດ່ຽງຈາກການແລກປ່ຽນເງິນຕາ | 2 | 31 |
| ເງິນແຮທີ່ເກີດຂຶ້ນໃນປີ | (472) | (133) |
| **ຍອດເຫຼືອໃນທ້າຍປີ** | 1.159 | **1.629** |

## 9. ຊັບສິນບັດຄົງທີ່ມີຕົວຕົນ

| | *ບົດ ອະທິບາຍ* | 2018<br>*(ລ້ານກີບ)* | 2017<br>*(ລ້ານກີບ)* |
|---|---|---|---|
| ວຽກກຳລັງກໍ່ສ້າງ | | 220 | 329 |
| ຊັບສິນບັດຄົງທີ່ມີຕົວຕົນ | | 201 | 240 |
| ຊັບສິນບັດຄົງທີ່ບໍ່ມີຕົວຕົນ | *8.1* | 4.095 | 13.260 |
| **ລວມ** | | **4.516** | **13.829** |

## 9.1 ຊັບສົມບັດຄົງທີ່ມີຕົວຕົນ

| | ສ່ວນປັບປຸງສິດທີ່ໃຫ້ເຊົ່າ *(ລ້ານກີບ)* | ອຸປະກອນຫ້ອງການ *(ລ້ານກີບ)* | ເຟີນິເຈີ ແລະ ເຄື່ອງຕິດຕັ້ງ *(ລ້ານກີບ)* | ຍານພາຫະນະ *(ລ້ານກີບ)* | ລວມ *(ລ້ານກີບ)* |
|---|---|---|---|---|---|
| **ຕົ້ນທຶນ** | | | | | |
| ຍອດເຫຼືອໃນວັນທີ 1 ມັງກອນ 2017 | **21.660** | **21.633** | **1.943** | **4.114** | **49.350** |
| ເພີ່ມຂຶ້ນ | 2.434 | 3.452 | 139 | - | 6.025 |
| ສະສາງ | - | (12) | - | (309) | (321) |
| **ຍອດເຫຼືອໃນວັນທີ 31 ທັນວາ 2017 ແລະ 1 ມັງກອນ 2018** | **24.094** | **25.073** | **2.082** | **3.805** | **55.054** |
| **1 ມັງກອນ 2018** | | | | | |
| ເພີ່ມຂຶ້ນ | 640 | 96 | 7 | | 743 |
| ໂອນເຂົ້າຊັບສົມບັດລໍຖ້າສະສາງ | (23.968) | (2.214) | (7) | | (26.189) |
| ສະສາງ | (43) | (6.023) | (110) | (1.477) | (7.653) |
| **ຍອດເຫຼືອໃນວັນທີ 31 ທັນວາ 2018** | **723** | **16.932** | **1.972** | **2.328** | **21.955** |
| **ຄ່າຫຼຸ້ຍຫ້ຽນສະສົມ** | | | | | |
| ຍອດເຫຼືອໃນວັນທີ 1 ມັງກອນ 2017 | **21.306** | **14.455** | **932** | **1.577** | **38.270** |
| ຄ່າຫຼຸ້ຍຫ້ຽນໃນປີ | 259 | 2.452 | 292 | 807 | 3.810 |
| ສະສາງ | - | (2) | - | (284) | (286) |
| **ຍອດເຫຼືອໃນວັນທີ 31 ທັນວາ 2017 ແລະ 1 ມັງກອນ 2018** | **21.565** | **16.905** | **1.224** | **2.100** | **41.794** |
| ຄ່າຫຼຸ້ຍຫ້ຽນໃນປີ | 334 | 2.316 | 277 | 506 | 3.433 |
| ໂອນເຂົ້າຊັບສົມບັດລໍຖ້າສະສາງ | (21.826) | (1.103) | (6) | | (22.935) |

| | ສ່ວນປັບປຸງສິດທີ່ໃຫ້ເຊົ່າ *(ລ້ານກີບ)* | ອຸປະກອນຫ້ອງການ *(ລ້ານກີບ)* | ເຟີນິເຈີ ແລະ ເຄື່ອງຕິດຕັ້ງ *(ລ້ານກີບ)* | ຍານພາຫະນະ *(ລ້ານກີບ)* | ລວມ *(ລ້ານກີບ)* |
|---|---|---|---|---|---|
| ສະສາງ | (21) | (3.488) | (66) | (857) | (4.432) |
| **ຍອດເຫຼືອໃນວັນທີ 31 ທັນວາ 2018** | **52** | **14.630** | **1.429** | **1.749** | **17.860** |
| | | | | | |
| **ມູນຄ່າທາງບັນຊີ** | | | | | |
| **ໃນວັນທີ 1 ມັງກອນ 2017** | **354** | **7.178** | **1.011** | **2.537** | **11.080** |
| **ໃນວັນທີ 31 ທັນວາ 2017 ແລະ 1 ມັງກອນ 2018** | **2.529** | **8.168** | **858** | **1.705** | **13.260** |
| **ໃນວັນທີ 31 ທັນວາ 2018** | **671** | **2.302** | **543** | **579** | **4.095** |

## 10. ການແຍກປະເພດຊັບສິນບັດລໍຖ້າສະສາງ

| | 2018<br>*(ລ້ານກີບ)* | 2017<br>*(ລ້ານກີບ)* |
|---|---|---|
| ອາຄານ ແລະ ອຸປະກອນ | 3.254 | - |
| | **3.254** | **-** |

ໃນເດືອນຕຸລາ 2018, ທະນາຄານໄດ້ບັນທຶກຊັບສິນບັດຄົງທີ່ເພື່ອຂາຍໂດຍການບັນທຶກບັນຊີແມ່ນໄດ້ກຳນົດໃນບົດອະທິບາຍຊ້ອນທ້າຍ 4 (ຜ).

## 11. ຊັບສິນອາກອນເຍື້ອນຊຳລະ

ທະນະຄານມີຂາດ**ທຶນ**ສະສົມທີ່ສາມາດຍົກໄປຫັກຕໍ່ໄດ້ ດັ່ງນັ້ນທະນາຄານຊຶ່ງໄດ້ບັນທຶກ ຊັບສິນອາກອນເຍື້ອນຊຳລະໃນເອກະສານລາຍງານການເງິນ ໃນວັນທີ 31 ທັນວາ 2018.

| | ໃນວັນທີ<br>1 ມັງກອນ 2018<br>*(ລ້ານກີບ)* | (ຈ່າຍ)/ ຮັບ:<br>ກຳໄລ ຫຼື ຂາດທຶນ<br>*(ລ້ານກີບ)* | ໃນວັນທີ<br>31 ທັນວາ 2018<br>*(ລ້ານກີບ)* |
|---|---|---|---|
| **ຊັບສິນອາກອນເຍື້ອນຊຳລະ** | | | |
| ເງິນແຮ | 391 | (113) | 278 |
| ຜົນຂາດທຶນທີ່ຖືຍົກມາ | - | 8.086 | 8.086 |
| | **391** | **7.973** | **8.364** |

ຜົນຂາດທຶນທາງພາສີອາກອນຈະຫມົດອາຍຸ ໃນປີ 2019-2021 ທະນະຄານຄາດວ່າຈະໄດ້ຮັບກຳໄລສຸດທິຈາກການຂາຍອະສັງຫາລິມະຊັບໃນປີ 2019 ດັ່ງນັ້ນຝ່າຍບໍລິຫານຈຶ່ງໄດ້ປັບຜົນປະມານການກຳໄລທາງພາສີໃນອະນາຄົດ ແລະ ຮັບຮູ້ອາກອນເຍື້ອນຊຳລະສຳຫລັບສ່ວນທີ່ເປັນຜົນຂາດທຶນຈຳນວນ 8.364 ລ້ານກີບ ເນື່ອງຈາກຜູ້ບໍລິຫານພິຈາລະນາແລ້ວວ່າຜົນຂາດທຶນຈາກພາສີລາຍໄດ້ຈະສາມາດນຳໃຊ້ໄດ້

| | ໃນວັນທີ<br>1 ມັງກອນ 2017<br>ກີບ<br>*(ລ້ານກີບ)* | (ຈ່າຍ)/ ຮັບ:<br>ກຳໄລ ຫຼື ຂາດທຶນ<br>ກີບ<br>*(ລ້ານກີບ)* | ໃນວັນທີ<br>31 ທັນວາ 2017<br>ກີບ<br>*(ລ້ານກີບ)* |
|---|---|---|---|
| **ຊັບສິນອາກອນເຍື້ອນຊຳລະ** | | | |
| ເງິນແຮ | 2.382 | (1.992) | 391 |
| | **2.382** | **(1.992)** | **391** |

## 12. ຊັບສິນອື່ນໆ

| | 2018 *(ລ້ານກີບ)* | 2017 *(ລ້ານກີບ)* |
|---|---|---|
| ໜີ້ຕ້ອງຮັບດອກເບ້ຍຄ້າງຮັບ | 814 | 51 |
| ໜີ້ຕ້ອງຮັບອື່ນໆ ແລະ ຈ່າຍລ່ວງໜ້າ | 2.692 | 4.667 |
| | **3.506** | **4.718** |

## 13. ເງິນຝາກຂອງລູກຄ້າ

### ກ. ຈັດຕາມປະເພດຂອງເງິນຝາກ

| | 2018 *(ລ້ານກີບ)* | 2017 *(ລ້ານກີບ)* |
|---|---|---|
| ເງິນຝາກກະແສລາຍວັນ | 311.562 | 317.778 |
| ເງິນຝາກປະຢັດ | 4.781 | 190.104 |
| ເງິນຝາກມີກຳນົດ | 96.604 | 142.495 |
| ເງິນຝາກລໍຖ້າຮຽກເກັບຈາກລູກຄ້າລາຍຍ່ອຍ* | 6.502 | - |
| | **419.449** | **650.377** |

* ເງິນຝາກເຫຼົ່ານີ້ສະແດງໃຫ້ເຫັນຍອດເງິນທີ່ລໍຖ້າຮຽກເກັບຈາກລູກຄ້າລາຍບຸກຄົນທີ່ມີຜົນມາຈາກການປິດໃຫ້ບໍລິການແກ່ລູກຄ້າລາຍຍ່ອຍຂອງທະນາຄານ ເອເອັນແຊັດ ລາວ ຈຳກັດ ຍອດຄົງເຫລືອເຫຼົ່ານີ້ໄດ້ຮັບການອະນຸມັດໂດຍ ທຫລ ໃຫ້ບັນທຶກ ແລະ ຕິດຕາມໃນບັນຊີລໍຖ້າຮຽກເກັບລູກຄ້າລາຍຍ່ອຍເປັນໄລຍະເວລາ 3 ປີ ຫລັງຈາກນັ້ນຈະໂອນເງິນທີ່ຍັງເຫລືອດັ່ງກ່າວເຂົ້າເງິນຄັງຂອງລັດຖະບານຖ້າລູກຄ້າບໍ່ຮຽກຮ້ອງຄືນ.

### ຂ. ຈັດຕາມປະເພດສະກຸນເງິນ

| | 2018 *(ລ້ານກີບ)* | 2017 *(ລ້ານກີບ)* |
|---|---|---|
| ກີບ | 74.963 | 71.199 |
| ໂດລາ | 332.509 | 536.560 |
| ບາດ | 8.225 | 37.893 |
| ອື່ນໆ | 3.752 | 4.725 |
| | **419.449** | **650.377** |

## ຄ. ຈັດປະເພດຕາມອັດຕາດອກເບ້ຍ (ຕໍ່ປີ)

| | 2018<br>% | 2017<br>% |
|---|---|---|
| ບັນຊີຝາກປະຢັດ | | |
| ລາວກີບ | 1.00 - 1.91 | 1.00 – 1.91 |
| ໂດລາສະຫະລັດ | 1.00 - 2.00 | 1.00 – 2.00 |
| ໄທບາດ | 0.50 - 2.00 | 0.50 – 2.00 |
| ບັນຊີຝາກມີກຳນົດ | | |
| ລາວກີບ | 2.00 - 3.00 | 2.00 – 3.00 |
| ໂດລາສະຫະລັດ | 0.25 - 1.75 | 0.25 – 1.75 |
| ໄທບາດ | 0.50 - 1.75 | 0.50 – 1.75 |

# 14. ໜີ້ຕ້ອງສົ່ງໃຫ້ທະນາຄານອື່ນ

## ກ. ຈັດຕາມປະເພດຂອງເງິນຝາກ

| | 2018<br>*(ລ້ານກີບ)* | 2017<br>*(ລ້ານກີບ)* |
|---|---|---|
| ເງິນຕາມຮຽກເກັບ | 62 | 60 |
| ເງິນຝາກອື່ນໆ | 88.318 | - |
| | **88.380** | **60** |

## ຂ. ຈັດປະເພດຕາມທີ່ຢູ່ອາໃສ

| | 2018<br>*(ລ້ານກີບ)* | 2017<br>*(ລ້ານກີບ)* |
|---|---|---|
| ພາຍໃນປະເທດ | 88.380 | 60 |
| | **88.380** | **60** |

## ຄ. ຈັດປະເພດຕາມສະກຸນເງິນ

| | 2018<br>*(ລ້ານກີບ)* | 2017<br>*(ລ້ານກີບ)* |
|---|---|---|
| ໂດລາສະຫະລັດ | 75.000 | 60 |
| ໄທບາດ | 62 | - |
| ອື່ນໆ | 13.318 | - |
| | **88.380** | **60** |

## 15. ໜີ້ສິນທາງອາກອນ

| | 2018<br>*(ລ້ານກີບ)* | 2017<br>*(ລ້ານກີບ)* |
|---|---|---|
| ອາກອນກຳໄລ | - | - |
| ອາກອນມູນຄ່າເພີ່ມ | 178 | 364 |
| ອາກອນຫັກໄວ້ນະທີ່ຈ່າຍ | 845 | 841 |
| ອາກອນເງິນສະຫວັດດີການ | 132 | 4 |
| | **1.155** | **1.209** |

## 16. ໜີ້ສິນອື່ນໆ

| | ບົດ<br>ອະທິບາຍ | 2018<br>*(ລ້ານກີບ)* | 2017<br>*(ລ້ານກີບ)* |
|---|---|---|---|
| ລາຍຮັບຮັບລ່ວງໜ້າ | | 319 | 284 |
| ໜີ້ຕ້ອງຈ່າຍໃຫ້ບຸກຄະລາກອນ | | 358 | 1.575 |
| ໜີ້ຕ້ອງສົ່ງດອກເບ້ຍຄ້າງຈ່າຍ | | 1.254 | 347 |
| ບັນຊີຊຳລະສະສາງ | | 1.013 | 1.122 |
| ໜີ້ຕ້ອງຈ່າຍອື່ນໆ - ພາກສ່ວນທີ່ກ່ຽວຂ້ອງ | *21* | 1.363 | 1.080 |
| ໜີ້ຕ້ອງຈ່າຍອື່ນໆ | | 4.226 | 5.852 |
| | | **8.533** | **10.260** |

## 17. ທຶນຈົດທະບຽນຖອກແລ້ວ

ການເຄື່ອນໄຫວຂອງທຶນຈົດທະບຽນຖອກແລ້ວໃນລະຫວ່າງປີແມ່ນໄດ້ສະແດງດັ່ງລຸ່ມນີ້:

| | 2018<br>*(ລ້ານກີບ)* | 2017<br>*(ລ້ານກີບ)* |
|---|---|---|
| ຍອດເຫຼືອໃນວັນທີ 1 ມັງກອນ | 300.000 | 300.000 |
| ຍອດເຫຼືອໃນວັນທີ 31 ທັນວາ | **300.000** | **300.000** |
| ລວມເງິນທຶນທີ່ປະກອບສ່ວນຕາມກົດໝາຍ | **300.000** | **300.000** |

ບໍ່ມີການເພີ່ມທຶນໃນລະຫວ່າງປີ 2018 ແລະ 2017.

## 18. ຄັງສຳຮອງຕາມລະບຽບການ

ຄັງສຳຮອງຕາມລະບຽບການຕ້ອງໄດ້ຮັກສາໄວ້ໃນອັດຕາຢ່າງໜ້ອຍ 10% ຂອງກຳໄລໃນປີ ເພື່ອປະຕິບັດຕາມຂໍ້ກຳນົດຂອງ ທຫລ. ທະນາຄານມີຂາດທຶນສະສົມຈຳນວນ 12.932 ລ້ານກີບ, ເພາະສະນັ້ນ ທາງທະນາຄານບໍ່ໄດ້ມີການບັນທຶກຄັງສຳຮອງຕາມລພບຽບການ.

## 19. ລາຍຈ່າຍດອກເບ້ຍ

| | 2018<br>*(ລ້ານກີບ)* | 2017<br>*(ລ້ານກີບ)* |
|---|---|---|
| ດອກເບ້ຍເງິນຝາກ | | |
| ເງິນຝາກປະຢັດ | 28 | 166 |
| ເງິນຝາກມີກຳນົດ | 2.326 | 4.225 |
| | **2.354** | **4.391** |

## 20. ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການ, ສຸດທິ

| | 2018<br>*(ລ້ານກີບ)* | 2017<br>*(ລ້ານກີບ)* |
|---|---|---|
| ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການ | | |
| ບໍລິການຊຳລະສະສາງ | 954 | 1.111 |
| ຄ່າທຳນຽມທີ່ກ່ຽວກັບເງິນໃຫ້ກູ້ຢືມ | 501 | 854 |
| ຄ່າທຳນຽມ ແລະ ຄ່າບໍລິການອື່ນໆ | 5.183 | 9.093 |
| | 6.638 | 11.058 |
| ລວມລາຍຈ່າຍຄ່າທຳນຽມ ແລະ ຄ່າບໍລິການ | (593) | (2.328) |
| **ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການ, ສຸດທິ** | **6.045** | **8.730** |

## 21. ອາກອນກຳໄລ

*ການຮັບຮູ້ອາກອນກຳໄລ ໃນກຳໄລ ຫຼື ຂາດທຶນ*

| | ບົດ ອະທິບາຍ | 2018 *(ລ້ານກີບ)* | 2017 *(ລ້ານກີບ)* |
|---|---|---|---|
| **ລາຍຈ່າຍອາກອນ ໃນປະຈຸບັນ** | | | |
| ໃນປີ | | - | - |
| **ລາຍຈ່າຍອາກອນເຍື່ອນຊຳລະ (ຜົນປະໂຫຍດ)** | | | |
| ລາຍການເຄື່ອນໄຫວຜິດດ່ຽງຊົ່ວຄາວ | *11* | 7.973 | (1.992) |
| **ລວມລາຍຈ່າຍອາກອນກຳໄລ(ຜົນປະໂຫຍດ)** | | **7.973** | **(1.992)** |

*ສົມທຽບອັດຕາອາກອນທີ່ມີຜົນບັງຄັບໃຊ້*

| | 2018 ອັດຕາ % | 2018 *(ລ້ານກີບ)* | 2017 ອັດຕາ % | 2017 *(ລ້ານກີບ)* |
|---|---|---|---|---|
| ຂາດທຶນກ່ອນຈ່າຍອາກອນກຳໄລ | | (1.147) | | (16.220) |
| ອັດຕາອາກອນກຳໄລທີ່ໃຊ້ຢູ່ໃນ ສປປ ລາວ | 24 | (275) | 24 | (3.893) |
| ຜົນກະທົບທາງອາກອນຂອງລາຍຮັບ ແລະ ລາຍຈ່າຍ ທີ່ບໍ່ແມ່ນລາຍຮັບທີ່ຕ້ອງເສຍອາກອນ ຫຼື ລາຍຈ່າຍທີ່ບໍ່ອະນຸຍາດໃຫ້ຫັກໃນການຄຳນວນກຳໄລທາງອາກອນ, ສຸດທິ | | 5 | | 14 |
| ຍອດຂາດທຶນຍົກມາທີ່ບໍ່ໄດ້ໃຊ້ | | - | | 5.896 |
| ການຮັບຮູ້ພາສີທີ່ຂາດທຶນໃນປີຜ່ານມາ | | 8086 | | - |
| ອື່ນໆ | | 383 | | (26) |
| | **695** | **(7.973)** | **-12** | **1.992** |

ລາຍຈ່າຍອາກອນກຳໄລແມ່ນຄິດໄລ່ໃນອັດຕາ 24% ຂອງກຳໄລທີ່ຖືກອາກອນ. ການຄິດໄລ່ອາກອນກຳໄລແມ່ນຕ້ອງໄດ້ຮັບການກວດກາ ແລະ ອະນຸມັດໂດຍເຈົ້າໜ້າທີ່ສ່ວຍສາອາກອນ.

## 22. ເງິນສົດ ແລະ ທຽບເທົ່າເງິນສົດ

| | ບົດ ອະທິບາຍ | 2018 *(ລ້ານກີບ)* | 2017 *(ລ້ານກີບ)* |
|---|---|---|---|
| ເງິນສົດ | 5 | 14.787 | 33.159 |
| ໜີ້ຕ້ອງຮັບຈາກ ທຫລ | | 35.300 | 166.704 |
| ໜີ້ຕ້ອງຮັບຈາກສຳນັກງານໃຫຍ່ ແລະ ສາຂາອື່ນ | | 163.263 | 119.301 |
| ໜີ້ຕ້ອງຮັບຈາກທະນາຄານອື່ນ | | 183.543 | 137.907 |
| | | **396.893** | **457.071** |

## 23. ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ

ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງປະກອບດ້ວຍການເຄື່ອນໄຫວທີ່ທັງໝົດທີ່ດຳເນີນງານໂດຍຜ່ານພາກສ່ວນອື່ນທີ່ກ່ຽວຂ້ອງກັບທະນາຄານ. ພາກສ່ວນນັ້ນຈະກ່ຽວຂ້ອງກັບທະນາຄານຖ້າຫາກວ່າ:

(ກ) ມີການພົວພັນທາງກົງ ຫຼື ທາງອ້ອມໂດຍຜ່ານພາກສ່ວນໜຶ່ງ ຫຼື ຫຼາຍພາກສ່ວນທີ່ກ່ຽວຂ້ອງ:

- ຄວບຄຸມ, ຖືກຄວບຄຸມ ຫຼື ຢູ່ພາຍໃຕ້ການຄວບຄຸມດຽວກັນກັບທະນາຄານ (ໃນນີ້ລວມມີບໍລິສັດແມ່, ບໍລິສັດຍ່ອຍ ແລະ ສະມາຊິກຂອງບໍລິສັດຍ່ອຍ);
- ມີສ່ວນໄດ້ເສຍໃນທະນາຄານທີ່ມີອິດທິພົນສູງກວ່າທະນາຄານ; ຫຼື
- ມີສ່ວນຮ່ວມໃນການຄວບຄຸມທະນາຄານ.

(ຂ) ພາກສ່ວນທີ່ເປັນຜູ້ຮ່ວມທຶນເຊິ່ງໃນນັ້ນທະນະຄານເປັນຮຸ້ນສ່ວນ;

(ຄ) ບຸກຄົນນັ້ນເປັນສະມາຊິກຄົນສຳຄັນໃນຄະນະຜູ້ບໍລິຫານຂອງທະນະຄານ ຫຼື ບໍລິສັດແມ່;

(ງ) ບຸກຄົນນັ້ນເປັນສະມາຊິກໃນຄອບຄົວຂອງບຸກຄົນໃດໜຶ່ງ ທີ່ອ້າງເຖິງໃນຂໍ້ (ກ) ຫຼື (ງ);

(ຈ) ພາກສ່ວນທີ່ເປັນຂອງທະນາຄານຄຸ້ມຄອງດູແລ, ຄວບຄຸມຮ່ວມກັນ, ຫຼື ມີອິດທິພົນສູງ ຫຼື ອຳນາດໃນການລົງຄະແນນຢ່າງມີສາລະສຳຄັນໃນທະນາຄານ ດັ່ງກ່າວ ທີ່ມີສ່ວນກ່ຽວຂ້ອງໂດຍທາງກົງ ຫຼື ທາງອ້ອມ ຫຼື ບຸກຄົນໃດໜຶ່ງທີ່ອ້າງເຖິງໃນຂໍ້ (ຄ) ຫຼື (ງ); ຫຼື

(ສ) ບຸກຄົນທີ່ຢູ່ໃນແຜນການຜົນປະໂຫຍດຂອງພະນັກງານຫຼັງອອກຈາກທະນາຄານ, ຫຼື ຂອງທະນາຄານອື່ນທີ່ເປັນພາກສ່ວນກ່ຽວຂ້ອງກັບທະນາຄານ.

ລາຍການເຄື່ອນໄຫວທີ່ມີສາລະສຳຄັນ ໃນໄລຍະເວລາປີສິ້ນສຸດ 31 ທັນວາ 2018 ແລະ 2017 ກັບພາກສ່ວນທີ່ກ່ຽວຂ້ອງ ມີດັ່ງນີ້:

| **ພາກສ່ວນທີ່ກ່ຽວຂ້ອງ** | **ສາຍພົວພັນ** | **ການເຄື່ອນໄຫວ** | **2018** *(ລ້ານກີບ)* | **2017** *(ລ້ານກີບ)* |
|---|---|---|---|---|
| ທະນາຄານ ເອເອັນແຊັດ - ເມລເບີລ | ສຳນັກງານໃຫຍ່ | ລາຍຈ່າຍກຸ່ມຕ່າງປະເທດ | 9.667 | 11.873 |
| ທະນາຄານ ເອເອັນແຊັດ - ສິງກະໂປ | ກຸ່ມທຸລະກິດ | ລາຍຈ່າຍດອກເບ້ຍ | 5.349 | 2.673 |
| ທະນາຄານ ເອເອັນແຊັດ- ສູນກາງມະນີລາ | ກຸ່ມທຸລະກິດ | ລາຍຮັບດອກເບ້ຍ | 301 | 435 |
| ທະນາຄານ ເອເອັນແຊັດ- ສູນກາງບັງກະລໍ | ກຸ່ມທຸລະກິດ | ລາຍຈ່າຍກຸ່ມຕ່າງປະເທດ | 535 | 529 |
| ທະນາຄານ ເອເອັນແຊັດ-ສູນກາງຟີຈີ | ກຸ່ມທຸລະກິດ | ລາຍຈ່າຍກຸ່ມຕ່າງປະເທດ | - | 23 |

ຍອດເຫຼືອທີ່ມີສາລະສຳຄັນກັບພາກສ່ວນທີ່ກ່ຽວຂ້ອງ ມີດັ່ງນີ້:

| **ພາກສ່ວນທີ່ກ່ຽວຂ້ອງ** | **ການກ່ຽວຂ້ອງ** | **ການກ່ຽວຂ້ອງ** | **2018** *(ລ້ານກີບ)* | **2017** *(ລ້ານກີບ)* |
|---|---|---|---|---|
| ທະນາຄານ ເອເອັນແຊັດ - ເມລເບີລ | ສຳນັກງານໃຫຍ່ | ຊັບສິນ-ໜີ້ຕ້ອງຮັບ | 369 | 346 |
| ທະນາຄານ ເອເອັນແຊັດ - ເມລເບີລ | ສຳນັກງານໃຫຍ່ | ໜີ້ສິນ-ໜີ້ຕ້ອງສົ່ງ | 1.259 | 996 |
| ທະນາຄານ ເອເອັນແຊັດ - ສິງກະໂປ | ກຸ່ມທຸລະກິດ | ຊັບສິນ, ເງິນຝາກ, ດອກເບ້ຍຄ້າງຮັບ | 255.388 | 281.451 |
| ທະນາຄານ ເອເອັນແຊັດ- ສູນກາງມະນີລາ | ກຸ່ມທຸລະກິດ | ໜີ້ສິນ-ໜີ້ຕ້ອງສົ່ງ | 44 | 26 |
| ທະນາຄານ ເອເອັນແຊັດ- ສູນກາງບັງກະລໍ | ກຸ່ມທຸລະກິດ | ໜີ້ສິນ-ໜີ້ຕ້ອງສົ່ງ | 58 | 58 |

ຄ່າຕອບແທນໃຫ້ແກ່ຄະນະອຳນວຍການ ແລະ ຄະນະຜູ້ບໍລິຫານມີດັ່ງນີ້:

| | 2018 (ລ້ານກີບ) | 2017 (ລ້ານກີບ) |
|---|---|---|
| ເງິນເດືອນ | 4.480 | 4.994 |
| ເງິນໂບນັດ | 1.109 | 706 |
| ເງິນອຸດໜູນອື່ນໆ | 809 | 437 |
| | **6.398** | **6.137** |

## 24. ພາລະຜູກພັນ

ໃນພາກປະຕິບັດຂອງການດຳເນີນທຸລະກິດ, ທາງທະນາຄານໄດ້ມີພາລະຜູກພັນຕ່າງໆ ແລະ ໜີ້ສິນ ທີ່ອາດຈະເກີດຂຶ້ນທີ່ແນ່ນອນທາງດ້ານກົດໝາຍໃຫ້ກັບລູກຄ້າຂອງຕົນ. ຄາດວ່າຈະບໍ່ເກີດຄວາມເສຍຫາຍທີ່ມີສາລະສຳຄັນ ຈາກລາຍການດັ່ງກ່າວ ຊຶ່ງປະກອບດ້ວຍ:

| | 2018<br>*(ລ້ານກີບ)* | 2017<br>*(ລ້ານກີບ)* |
|---|---|---|
| ໜັງສືຄ້ຳປະກັນທີ່ຍັງຄ້າງຊຳລະ | 573 | 557 |
| ໜັງສືສິນເຊື່ອທີ່ຍັງຄ້າງຊຳລະ | 11.957 | - |
| ເງິນເບີກເກີນບັນຊີຍັງບໍ່ທັນໄດ້ຖອນ | 831 | 812 |
| ຂໍ້ຜູກພັນທາງສັນຍາອື່ນໆ | 346.243 | 304.477 |
| ເງິນກູ້ທີ່ຍັງບໍ່ທັນເບີກ | 20.855 | 20.326 |
| | **380.459** | **326.172** |

## 25. ເຫດການເກີດຂຶ້ນພາຍຫຼັງ

ເຫດການທີ່ເກີດຂຶ້ນພາຍຫຼັງສິ້ນສຸດປີການບັນຊີ, ເນື່ອງຈາກການປ່ຽນແປງກົນລະຍຸດທາງທຸລະກິດຂອງກຸ່ມທະນາຄານອົດສະຕາລີແລະນິວຊີແລນ ຈຳກັດ ("ANZBGL") ພາຍໃນທຸລະກິດສາກົນ ເພື່ອສຸມໃສ່ການໃຫ້ການບໍລິການແກ່ທຸລະກິດສະຖາບັນ. ດັ່ງນັ້ນ ຮູບແບບການດຳເນີນທຸລະກິດໃນ ສປປ ລາວ ໄດ້ຖືກປັບປ່ຽນຈາກຮູບແບບທະນາຄານລູກຂອງ ANZBGL ມາເປັນສາຂາຂອງ ANZBGLໃນວັນທີ່ 08 ມີນາ 2019. ການປັບປ່ຽນດັ່ງກ່າວໄດ້ຖືກອະນຸມັດໂດຍຄະນະຜູ້ອຳນວຍການຂອງ ANZBGL ໃນກອງປະຊຸມໃນວັນທີ 12 ກັນຍາ 2018 ແລະທະນາຄານແຫ່ງ ສປປ ລາວ ໄດ້ອອກໃບອະນຸຍາດໃນການດຳເນີນທຸລະກິດໃນຮູບແບບສາຂາໃນວັນທີ່ 21 ມັງກອນ 2019, ພ້ອມດຽວກັນກັບການປ່ຽນຮູບແບບການດຳເນີນທຸລະກິດຈາກທະນາຄານລູກມາເປັນສາຂາ, ທະນາຄານຍັງໄດ້ດຳເນີນການປ່ຽນແປງລະບົບທະນາຄານໃຫມ່ (MIDANZ) ເຊິ່ງໄດ້ປ່ຽນແທນລະບົບທະນາຄານໃນປະຈຸບັນ (Finacle).